Lao/ລາວ

Australian Government

ການລົງຄະແນນສຽງແມ່ນເປັນການບັງຄັບ

# ປຶ້ມນ້ອຍການລົງປະຊາມະຕິ

## ທີ່ເປັນທາງການຂອງທ່ານ

ປຶ້ມນ້ອຍນີ້ລວມມີ:




ໜ້າ 5




ໜ້າ 23

# ກ່ຽວກັບປື້ມນ້ອຍຫົວນີ້

ປື້ມນ້ອຍການລົງປະຊາມະຕິຢ່າງເປັນທາງການສະບັບນີ້ບັນຈຸສອງ ເອກະສານສຳຄັນຄື:
ເອກະສານການລົງປະຊາມະຕິ Yes/No ຢ່າງເປັນທາງການຂອງທ່ານ, ແລະ
ຄູ່ມືຢ່າງເປັນທາງການຂອງທ່ານໃນການລົງປະຊາມະຕິ 2023.




**ໜ້າ 5** **ເອກະສານການລົງປະຊາມະຕິ Yes/No ຢ່າງເປັນທາງການຂອງທ່ານ**

**ໜ້າ 6** **ສິ່ງທີ່ອາດຈະປ່ຽນແປງໃນລັດຖະທຳມະນູນ**

ໜ້ານີ້ລະບຸການປ່ຽນແປງທີ່ໄດ້ສະເໜີໃຫ້ເຮັດໃນລັດຖະທຳມະນູນ.

ກົດໝາຍທີ່ສະເໜີໄດ້ຮັບການຮັບຮອງເອົາໂດຍທັງສອງສະພາ: ການປ່ຽນແປງລັດຖະທຳມະນູນ (Voice ຂອງ ຊາວອາບໍຣິຈີໂນລ ແລະ ທໍເຣສເທຣດໄປແລນເດີ) ປີ 2023 [Constitution Alteration (Aboriginal and Torres Strait Islander Voice) 2023].

**ໜ້າ 7** **ກໍລະນີ Yes ແລະ No**

ກໍລະນີສຳລັບການລົງຄະແນນສຽງ Yes ແລະ ກໍລະນີສຳລັບການລົງຄະແນນສຽງ No ໄດ້ຖືກນຳສະເໜີຢູ່ໃນໜ້າສະລັບກັນ.

ກໍລະນີ Yes/No ແມ່ນເຮັດຂຶ້ນໂດຍສະມາຊິກລັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງສະໜັບສະໜູນ ຫຼື ຄັດຄ້ານກົດໝາຍທີ່ສະເໜີ ແລະ ຜູ້ທີ່ຕ້ອງການສິ່ງຕໍ່ກໍລະນີດັ່ງກ່າວ.

**AEC ບໍ່ມີອຳນາດທາງກົດໝາຍໃນການແກ້ໄຂ ຫຼື ກວດສອບຂໍ້ເທັດຈິງກໍລະນີ Yes/No.**




**ໜ້າ 23** **ຄູ່ມືແນວປະຕິບັດຢ່າງເປັນທາງການຂອງທ່ານໃນການລົງປະຊາມະຕິໃນປີ 2023**

ຄູ່ມືທີ່ເປັນທາງການມີຂໍ້ມູນທີ່ສຳຄັນກ່ຽວກັບການລົງຄະແນນສຽງ ແລະ ສະຖານທີ່ປ່ອນບັດ, ແລະຂໍ້ຄວາມຈາກກຳມາທິການການເລືອກຕັ້ງ.

ຄູ່ມືຢ່າງເປັນທາງການໄດ້ຖືກຈັດກຽມໂດຍຄະນະກຳມະການເລືອກຕັ້ງອອສເຕຣເລັຍ (AEC).



# ເອກະສານທີ່ແປໄວ້ແລ້ວແລະຮູບແບບທີ່ເຂົ້າເຖິງ

**ປື້ມຄູ່ມືແນວປະຕິບັດຢ່າງເປັນທາງການຂອງທ່ານມີໃຫ້ເປັນພາສາອັງກິດແລະພາສາຂອງວັດທະນະທຳທີ່ຫຼາກຫຼາຍອື່ນໆ, ບັນດາພາສາຂອງກຸ່ມຊົນຊາດທຳອິດ (ອັດສຽງເທົ່ານັ້ນ), ແລະມີຕົວແບບເປັນພາສາອັງກິດສຳລັບຜູ້ລົງຄະແນນສຽງທີ່ຕາບອດຫຼືຕາມົວ, ແລະ ເປັນແບບ ອ່ານງ່າຍ (ຄູ່ມືທາງການເທົ່ານັ້ນ)**

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການລົງຄະແນນສຽງແລະການລົງປະຊາມະຕິ, ກະລຸນາໂທເລກ 1300 720 153 ເພື່ອຂໍຄວາມຊ່ວຍເຫຼືອເປັນພາສາຂອງທ່ານ.**

ໜ້ານີ້ຖືກປະໄວ້ຫວ່າງເປົ່າໂດຍເຈດຕະນາ



Australian Government

ການລົງຄະແນນສຽງແມ່ນເປັນການບັງຄັບ

# ເອກະສານການລົງປະຊາມະຕິ

# YES | NO

ຢ່າງເປັນທາງການຂອງທ່ານ

# ສິ່ງທີ່ອາດຈະມີການປ່ຽນແປງໃນລັດຖະທຳມະນູນ

## ຖະແຫຼງການສະເໜີໃຫ້ມີການປ່ຽນແປງແກ້ໄຂລັດຖະທຳມະນູນ

ກົດໝາຍທີ່ສະເໜີ ແມ່ນການດັດແກ້ລັດຖະທຳມະນູນ (ວອຍຊ໌ ຂອງຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ) 2023 [Constitution Alteration (Aboriginal and Torres Strait Islander Voice) ປີ 2023], ຈະປ່ຽນລັດຖະທຳມະນູນໂດຍໃສ່ຂໍ້ຄວາມຕໍ່ໄປນີ້ພາຍຫຼັງບົດທີ VIII:

**ບົດທີ IX— ການຮັບຮູ້ ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ (Chapter IX—Recognition of Aboriginal and Torres Strait Islander Peoples)**

**129 ວອຍຊ໌ ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ (Aboriginal and Torres Strait Islander Voice)**

ໃນການຮັບຮູ້ ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ໃນຖານະປະຊາຊົນທຳອິດຂອງອອສເຕຣເລັຍ:

(i) ຈະມີໜ່ວຍງານທີ່ເອີ້ນວ່າ ອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ວອຍຊ໌;

(ii) ອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ວອຍຊ໌ ອາດຈະເປັນຕົວແທນໃຫ້ລັດຖະສະພາ ແລະລັດຖະບານບໍລິຫານຂອງເຄືອຈັກກະພົບ ກ່ຽວກັບເລື່ອງທີ່ກ່ຽວຂ້ອງກັບຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ;

(iii) ຂຶ້ນກັບລັດຖະທຳມະນູນສະບັບນີ້, ລັດຖະສະພາຈະມີອຳນາດສ້າງກົດໝາຍກ່ຽວກັບ ເລື່ອງຕ່າງໆ ທີ່ກ່ຽວກັບ ອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ວອຍຊ໌, ລວມທັງອົງປະກອບ, ໜ້າທີ່, ອຳນາດ ແລະ ຂະບວນການຕ່າງໆ.

ນອກຈາກນີ້ ກົດໝາຍທີ່ສະເໜີຍັງຈະປ່ຽນແປງລັດຖະທຳມະນູນໂດຍການໃສ່ບົດຄວາມຕໍ່ໄປນີ້ເຂົ້າໃນເນື້ອໃນຂອງລັດຖະທຳມະນູນ, ພາຍຫຼັງການອ້າງອີງເຖິງ 'ບົດທີ VIII ການດັດແກ້ລັດຖະທຳມະນູນ' ('Chapter VIII Alteration of the Constitution'):

| | |
|---|---|
| ບົດທີ IX<br>(Chapter IX | ການຮັບຮູ້ ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ<br>Recognition of Aboriginal and Torres Strait Islander Peoples) |



# ໃນໜ້າຕໍ່ໄປນີ້ ທ່ານຈະພົບເຫັນກໍລະນີ **Yes** ແລະ **No**

ຂໍ້ໂຕ້ຖຽງສຳລັບແຕ່ລະກໍລະນີໄດ້ຖືກຈັດທຳຂຶ້ນໂດຍສ່ວນໃຫຍ່ຂອງສະມາຊິກຣັດຖະສະພາ ແລະສະມາຊິກສະພາສູງຂອງຣັດຖະບານກາງທີ່ໄດ້ລົງຄະແນນສຽງ ຫຼື ຄັດຄ້ານກົດໝາຍທີ່ສະເໜີໃຫ້ປ່ຽນແປງຣັດຖະທຳມະນູນ ແລະ ຜູ້ທີ່ຕ້ອງການທີ່ຈະສົ່ງຕໍ່ການໂຕ້ຖຽງດັ່ງກ່າວ.

ຜູ້ທີ່ລົງຄະແນນສຽງສະໜັບສະໜູນກົດໝາຍທີ່ສະເໜີ ແລະ ຜູ້ທີ່ຕ້ອງການທີ່ຈະສົ່ງຕໍ່ຂໍ້ໂຕ້ຖຽງດັ່ງກ່າວ ໄດ້ສ້າງກໍລະນີ Yes ໃນຂະນະທີ່ຜູ້ທີ່ລົງຄະແນນສຽງຕໍ່ຕ້ານກົດໝາຍທີ່ສະເໜີ ແລະ ຜູ້ທີ່ຕ້ອງການທີ່ຈະສົ່ງຕໍ່ຂໍ້ໂຕ້ຖຽງດັ່ງກ່າວ ໄດ້ສ້າງກໍລະນີ No.

ການນັບຄຳຖືກຈຳກັດໃຫ້ຢູ່ພຽງ 2,000 ຄຳໃນພາສາອັງກິດສຳລັບແຕ່ລະກໍລະນີໂດຍພາກທີ 11(1) ຂອງປະມວນກົດໝາຍວ່າດ້ວຍການລົງ*ປະຊາມະຕິ* (*ບົດບັນຍັດວ່າດ້ວຍການສະເໜີກົດໝາຍເພື່ອດັດແກ້ຣັດຖະທຳມະນູນ*) *1984* (Cth).

# ກໍລະນີສໍາລັບການລົງຄະແນນສຽງ

# Yes

ກໍລະນີສໍາລັບການລົງຄະແນນສຽງ **Yes**
ແມ່ນເລີ່ມຕົ້ນໃນ **ໜ້າທີ 10**
ແລະ ຫຼັງຈາກນັ້ນຈະສະແດງໃນໜ້າອື່ນສະລັບກັນ.

**ກົດໝາຍທີ່ສະເໜີ:**

ເພື່ອດັດປ່ຽນຣັດຖະທໍາມະນູນເພື່ອຮັບຮູ້ຊົນຊາດທໍາອິດຂອງອອສເຕຣເລັຍ ໂດຍການສ້າງຕັ້ງ Voice ຂອງຊາວອາບໍຣິຈິໂນລ ແລະ ທໍເຣັສເທຣດ ໄອແລນເດີ.

**A proposed law:**

To alter the Constitution to recognise the First Peoples of Australia by establishing an Aboriginal and Torres Strait Islander Voice.

**ໃຜຂຽນເລື້ອງນີ້?**

ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງໃຫ້ກົດໝາຍທີ່ສະເໜີມາ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກໍາມະການເລືອກຕັ້ງ.



# ກໍລະນີສໍາລັບການລົງຄະແນນສຽງ

# No

ກໍລະນີສໍາລັບການລົງຄະແນນສຽງ **No**
ແມ່ນເລີ່ມຕົ້ນໃນ **ໜ້າທີ 11**
ແລະ ຫຼັງຈາກນັ້ນຈະສະແດງໃນໜ້າອື່ນສະລັບກັນ.

**ກົດໝາຍທີ່ສະເໜີ:**

ເພື່ອດັດປ່ຽນຣັດຖະທໍາມະນູນເພື່ອຮັບຮູ້ຊົນຊາດທໍາອິດຂອງອອສເຕຣເລັຍ ໂດຍການສ້າງຕັ້ງ Voice ຂອງຊາວອາບໍຣິຈິໂນລ ແລະ ທໍເຣັສເທຣດ ໄອແລນເດີ.

**A proposed law:**

To alter the Constitution to recognise the First Peoples of Australia by establishing an Aboriginal and Torres Strait Islander Voice.

**ໃຜຂຽນເລື້ອງນີ້?**

ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງຄັດຄ້ານກົດໝາຍທີ່ສະເໜີ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກໍາມະການເລືອກຕັ້ງ.

**ລົງຄະແນນສຽງ Yes ເພື່ອອະນາຄົດທີ່ດີຂຶ້ນສໍາລັບຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ແລະ ຊາວອອສເຕຣເລັຍທັງໝົດ.**

**ລົງຄະແນນສຽງ Yes ເພື່ອຄວາມສາມັກຄີ, ຄວາມຫວັງ ແລະ ເພື່ອສ້າງຄວາມແຕກຕ່າງໃນທາງບວກ.**

## ການລົງຄະແນນສຽງ YES ແມ່ນກ່ຽວກັບ:

**ການຮັບຮູ້**

- **ການຮັບຮູ້**ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ໃນຣັດຖະທໍາມະນູນຂອງພວກເຮົາ ແລະໃຫ້ຄວາມເຄົາລົບຕໍ່ ໖໕,໐໐໐ ປີຂອງວັດທະນະທໍາ ແລະ ປະເພນີ.

**ການຮັບຟັງ**

- **ຮັບຟັງ**ຄໍາແນະນໍາຈາກຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ກ່ຽວກັບເລື່ອງທີ່ສົ່ງຜົນກະທົບຕໍ່ຊີວິດຂອງເຂົາເຈົ້າເພື່ອໃຫ້ລັດຖະບານຕັດສິນໃຈໄດ້ດີຂຶ້ນ.

**ຜົນໄດ້ຮັບທີ່ດີກວ່າ**

- **ສ້າງຄວາມກ້າວໜ້າຕົວຈິງ**ໃນດ້ານສາທາລະນະສຸກ, ການສຶກສາ, ການຈ້າງງານ ແລະ ທີ່ຢູ່ອາໄສ, ເພື່ອໃຫ້ຊາວພື້ນເມືອງມີຊີວິດການເປັນຢູ່ທີ່ດີຂຶ້ນ.

## ມັນເປັນການປ່ຽນແປງທີ່ທ່ານເທົ່ານັ້ນສາມາດເຮັດໃຫ້ເກີດຂຶ້ນໄດ້.

ລົງຄະແນນສຽງ Yes ໃຫ້ກັບຄວາມຄິດທີ່ມາຈາກຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ໂດຍກົງ: **ການຮັບຮອງຣັດຖະທໍາມະນູນຜ່ານ Voice (Constitutional Recognition through a Voice)**.

### Voice ແມ່ນຫຍັງ:

ວອຍຊ໌ (Voice) ຈະເປັນຄະນະກໍາມະການຂອງຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ເຊິ່ງຈະໃຫ້ຄໍາປຶກສາແກ່ຣັດຖະສະພາ ແລະ ຣັດຖະບານ ກ່ຽວກັບບັນຫາທີ່ມີຜົນກະທົບຕໍ່ຊຸມຊົນຂອງເຂົາເຈົ້າ.

ມັນຈະປະກອບມີຊາວອອສເຕຣເລັຍພື້ນເມືອງຈາກທຸກໆລັດແລະອານາເຂດ, ໝູ່ເກາະທໍເຣສເທຣດ ແລະ ຕົວແທນຈາກພາກພື້ນແລະຊຸມຊົນຫ່າງໄກ.

ສະມາຊິກຂອງ Voice ຈະຖືກເລືອກໂດຍຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ໃນເຂດທ້ອງຖິ່ນຂອງເຂົາເຈົ້າ ແລະຮັບໃຊ້ຕາມລະຍະເວລາທີ່ກໍານົດໄວ້.

## ເປັນຫຍັງພວກເຮົາຈຶ່ງຕ້ອງການມັນ:

ມີຄວາມທ້າທາຍອັນໃຫຍ່ຫຼວງທີ່ ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ປະເຊີນຢູ່:

- ຊົ່ວອາຍຸໄຂສັ້ນກວ່າຊາວອອສເຕຣເລັຍທີ່ບໍ່ແມ່ນເຜົ່າພື້ນເມືອງ 8 ປີ.
- ອັດຕາການເປັນພະຍາດ ແລະ ອັດຕາການຕາຍຂອງເດັກອ່ອນຮ້າຍແຮງລົງ.
- ອັດຕາການຂ້າຕົວຕາຍສູງຂຶ້ນສອງເທົ່າ.
- ໂອກາດໃນການສຶກສາ ແລະ ການຝຶກອົບຮົມໜ້ອຍລົງ.

ເຫັນໄດ້ຢ່າງຊັດແຈ້ງວ່າວິທີການປະຈຸບັນໃຊ້ບໍ່ໄດ້ຜົນ.

ເພື່ອປິດຊ່ອງຫວ່າງເຫຼົ່ານີ້, ຊອກຫາວິທີແກ້ໄຂແລະວາງແຜນສໍາລັບອະນາຄົດ, ພວກເຮົາຈໍາເປັນຕ້ອງໄດ້ຟັງຄໍາແນະນໍາຈາກຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ກ່ຽວກັບບັນຫາທີ່ສົ່ງຜົນກະທົບຕໍ່ຊີວິດແລະຊຸມຊົນຂອງເຂົາເຈົ້າ.

## Voice ຈະເຮັດວຽກແນວໃດ:

**Voice ແມ່ນກ່ຽວກັບຄໍາແນະນໍາ**.

ເມື່ອຣັດຖະບານຮັບຟັງປະຊາຊົນກ່ຽວກັບບັນຫາທີ່ສົ່ງຜົນກະທົບຕໍ່ພວກເຂົາເຈົ້າ, ພວກເຂົາເຈົ້າຈະ:

- ຕັດສິນໃຈໄດ້ດີຂຶ້ນກວ່າເກົ່າ.
- ໄດ້ຜົນຮັບທີ່ດີກວ່າ.
- ມອບມູນຄ່າຂອງເງິນທີ່ດີຂຶ້ນ.

ກໍລະນີ Yes
ມີຕໍ່ຢູ່
ໜ້າ12

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງໃຫ້ກົດໝາຍທີ່ສະເໜີມາ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກໍາມະການເລືອກຕັ້ງ.**





## ເຫດຜົນໃນການລົງຄະແນນສຽງ NO – ບົດສະຫຼຸບ

ການລົງປະຊາມະຕິນີ້ບໍ່ແມ່ນພຽງແຕ່ກ່ຽວກັບ "ການຮັບຮູ້" ເທົ່ານັ້ນ. ຂໍ້ສະເໜີຂອງ Voice ນີ້ໄປໄກ ຫຼາຍກວ່ານັ້ນ.

ຖ້າຫາກຜ່ານ ມັນຈະເປັນການສະແດງໃຫ້ເຫັນການປ່ຽນແປງຣັດຖະທໍາມະນູນທີ່ໃຫຍ່ທີ່ສຸດໃນປະຫວັດສາດຂອງພວກເຮົາ.

ຖ້າຫາກຜ່ານ ມັນຈະເປັນການສະແດງໃຫ້ເຫັນການປ່ຽນແປງຣັດຖະທໍາມະນູນທີ່ໃຫຍ່ທີ່ສຸດໃນປະຫວັດສາດຂອງພວກເຮົາ.

**ຖ້າຫາກວ່າທ່ານບໍ່ຮູ້, ຈົ່ງລົງຄະແນນສຽງ no.**

### ມີຄວາມສ່ຽງ

ພວກເຮົາທຸກຄົນຕ້ອງການຊ່ວຍຊາວພື້ນເມືອງອອສເຕຣເລັຍໃນຊຸມຊົນທີ່ດ້ອຍໂອກາດ. ແນວໃດກໍ່ຕາມ, Voice ນີ້ບໍ່ແມ່ນຄໍາຕອບ ແລະ ມີຄວາມສ່ຽງທີ່ແທ້ຈິງຕໍ່ລະບົບຂອງຣັດຖະບານຂອງພວກເຮົາ.

Voice ກວມເອົາທຸກດ້ານຂອງ "ຣັດຖະບານບໍລິຫານ" ໂດຍສະເພາະ. ນີ້ໝາຍຄວາມວ່າບໍ່ມີບັນຫາໃດທີ່ໄກເກີນເອື້ອມ.

ໃນທີ່ສຸດສານສູງສຸດຈະກໍານົດອໍານາດຂອງຕົນ, ບໍ່ແມ່ນຣັດຖະສະພາ.

ມັນມີຄວາມສ່ຽງຕໍ່ຄວາມທ້າທາຍທາງດ້ານກົດໝາຍ, ຄວາມລ່າຊ້າ ແລະ ຣັດຖະບານທີ່ບໍ່ເຮັດວຽກ.

### ເປັນສິ່ງທີ່ບໍ່ຮູ້ຈັກ

ບໍ່ມີການລະບຸລາຍລະອຽດວ່າສະມາຊິກຂອງ Voice ຈະຖືກເລືອກແນວໃດ ຫຼືຈະດໍາເນີນງານແນວໃດ. ມີການຂໍໃຫ້ຊາວອອສເຕຣເລັຍລົງຄະແນນສຽງກ່ອນ ກ່ອນທີ່ລາຍລະອຽດເຫຼົ່ານີ້ຈະຖືກດໍາເນີນການ.

**ຊາວອອສເຕຣເລັຍຄວນມີລາຍລະອຽດກ່ອນການລົງຄະແນນສຽງ, ບໍ່ແມ່ນພາຍຫຼັງ.**

ພວກເຮົາບໍ່ຮູ້ວ່າມັນຈະເຮັດວຽກແນວໃດ, ພວກເຮົາບໍ່ຮູ້ວ່າໃຜຈະຮ່ວມຢູ່ໃນນັ້ນ, ແຕ່ພວກເຮົາຮູ້ວ່າມັນຈະເຮັດໃຫ້ພວກເຮົາຊາວອອອສເຕຣເລັຍແບ່ງແຍກກັນຢ່າງຖາວອນ.

ຜູ້ສະໜັບສະໜຸນ Voice ບາງຄົນເວົ້າວ່າ ອັນນີ້ພຽງແຕ່ຈະເປັນບາດກ້າວທໍາອິດ ໃນການຊົດເຊີຍ ແລະ ຊົດໃຊ້ຄ່າເສັຍຫາຍ ແລະ ການປ່ຽນແປງທີ່ຮຸນແຮງອື່ນໆ. ດັ່ງນັ້ນແມ່ນຫຍັງຈະເກີດຂຶ້ນຕໍ່ໄປ?

### ເຮັດໃຫ້ແບ່ງແຍກ

ການຮັບຮອງ Voice ໃນຣັດຖະທໍາມະນູນສໍາລັບຊາວອອສເຕຣເລັຍແຕ່ພຽງກຸ່ມດຽວໝາຍເຖິງການແບ່ງແຍກ ປະເທດຂອງພວກເຮົາຢ່າງຖາວອນ.

ມັນສ້າງຊົນຊັ້ນທີ່ແຕກຕ່າງກັນຂອງຄວາມເປັນພົນລະເມືອງໂດຍຜ່ານອົງການທີ່ບໍ່ເປັນທີ່ຮູ້ຈັກ ທີ່ມີກໍາລັງອັນເຕັມທີ່ຂອງຣັດຖະທໍາມະນູນຢູ່ເບື້ອງຫຼັງ. ຊາວອອສເຕຣເລັຍພື້ນເມືອງຫຼາຍຄົນບໍ່ສະໜັບ ສະໜູນເລື່ອງນີ້.

### ຖາວອນ

ການເອົາ Voice ເຂົ້າໄປໃນຣັດຖະທໍາມະນູນໝາຍຄວາມວ່າເປັນການຖາວອນ. ພວກເຮົາຈະຕິດຢູ່ກັບຜົນສະທ້ອນທາງລົບ.

## ສິບເຫດຜົນໃນການລົງຄະແນນສຽງ NO

### 1. VOICE ນີ້ມີຄວາມສ່ຽງທາງດ້ານກົດໝາຍ

ຣັດຖະທໍາມະນູນຂອງອອສເຕຣເລັຍເປັນເອກະສານທາງກົດໝາຍທີ່ສໍາຄັນທີ່ສຸດ ຂອງພວກເຮົາ. ທຸກໆຄໍາສາມາດເປີດໃຫ້ຕີຄວາມໝາຍໄດ້.

ອອສເຕຣເລັຍບໍ່ໄດ້ມີການປ່ຽນແປງຣັດຖະທໍາມະນູນນັບຕັ້ງແຕ່ປີ 1977. **ນີ້ຈະເປັນການປ່ຽນແປງຄັ້ງໃຫຍ່ທີ່ສຸດໃນລະບອບປະຊາທິປະໄຕຂອງພວກເຮົາໃນປະຫວັດສາດຂອງອອສເຕຣເລັຍ.**

ມັນເປັນການກະໂດດເຂົ້າໄປໃນສິ່ງທີ່ບໍ່ຮູ້ຈັກ. Voice ນີ້ຍັງບໍ່ໄດ້ຖືກທົດສອບເສັ້ນທາງຕົວຈິງເທື່ອ. ບໍ່ມີຣັດຖະທໍາມະນູນສະບັບໃດໃນໂລກທີ່ທຽບຄຽງແບບນີ້ໄດ້.

ການທີ່ເອົາ Voice ປະດິດສະຖານເຂົ້າໃນຣັດຖະທໍາມະນູນໝາຍເຖິງການເປີດໃຫ້ມີການທ້າທາຍທາງກົດໝາຍ ແລະ ການຕີຄວາມຈາກສານສູງ.

ບັນດາຜູ້ຊ່ຽວຊານດ້ານກົດໝາຍບໍ່ເຫັນດີນໍາ ແລະ ບໍ່ສາມາດຮູ້ໄດ້ຢ່າງແນ່ນອນວ່າ ສານສູງສຸດຈະຕີຄວາມການປ່ຽນແປງຣັດຖະທໍາມະນູນດັ່ງກ່າວແນວໃດ.

ກໍລະນີ No
ມີຕໍ່ຢູ່
ໜ້າ13

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງຄັດຄ້ານກົດໝາຍທີ່ສະເໜີ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກໍາມະການເລືອກຕັ້ງ.**

# ກໍລະນີສຳລັບການລົງຄະແນນສຽງ Yes

Voice ຈະໃຫ້ຄຳແນະນຳກ່ຽວກັບບັນຫາສຳຄັນທີ່ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ກຳລັງປະເຊີນ, ນັບຕັ້ງແຕ່ເລື້ອງສຸຂະພາບຂອງເດັກທີ່ດີຂຶ້ນໄປຈົນເຖິງການປັບປຸງການບໍລິການໃນເຂດຫ່າງໄກສອກຫຼີກ.

ຣັດຖະສະພາ ແລະ ຣັດຖະບານຍັງຈະຮັບຜິດຊອບຕໍ່ກົດໝາຍ ໂຄງການ ແລະ ເງິນທຶນ ທັງໝົດ.

**Patrick Dodson, ສະມາຊິກສະພາສູງຂອງ Western Australia, ຜູ້ຊົງຄຸນວຸດທິ ຂອງ Yawuru:**
*“ເມື່ອປະຊາຊົນຢູ່ໃນພາກພື້ນໄດ້ຮັບການຮັບຟັງແລະມີສ່ວນຮ່ວມ, ກົດໝາຍແລະນະໂຍບາຍທີ່ດີ ກວ່າເກົ່າຈະໄດ້ຖືກສ້າງຂຶ້ນ. ຄຳແນະນຳຈາກ Voice ຈະເຮັດໃຫ້ການຕັດສິນໃຈແລະທິດທາງຂອງພວກເຮົາມີຄວາມຊັດເຈນແລະປະສົບຜົນສຳ ເລັດຫຼາຍຂຶ້ນ. ການໄດ້ຮັບການຍອມຮັບໃນລັດຖະທຳມະນູນຈະຊ່ວຍຮັກສາປິ່ນປົວ ປະເທດຊາດຂອງພວກເຮົາ.”*

## VOICE: ຂໍ້ເທັດຈິງທີ່ສຳຄັນ

- ແນວຄວາມຄິດມາຈາກຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ.
- ຮັບຮູ້ປວງຊົນກຸ່ມທຳອິດ (First Peoples) ໃນລັດຖະທຳມະນູນຂອງພວກເຮົາ.
- ຄະນະກຳມະການຂອງຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ.
- ໃຫ້ປະຊາຊົນເວົ້າກ່ຽວກັບບັນຫາທີ່ມີຜົນກະທົບຕໍ່ພວກເຂົາເຈົ້າ.
- ການຮັບຟັງຈະໝາຍເຖິງຜົນຮັບທີ່ດີຂຶ້ນ – ແລະ ຄຸ້ມຄ່າກັບເງິນທີ່ດີຂຶ້ນ.
- ຜູ້ຕາງໜ້າຈາກຣັດແລະອານາເຂດທັງໝົດ, ໝູ່ເກາະ ທໍເຣສເທຣດ ແລະຊຸມຊົນຫ່າງໄກສອກຫຼີກ.
- ຈະລວມເອົາຊາວໜຸ່ມ ແລະ ຄວາມດຸ່ນດ່ຽງຂອງຜູ້ຊາຍ ແລະ ຜູ້ຍິງ.
- ຣັດຖະສະພາ ແລະ ຣັດຖະບານຍັງຮັບຜິດຊອບຕໍ່ກົດໝາຍ, ແຜນງານ ແລະ ການສະໜອງທຶນ.

### ສືບຕໍ່ການອ່ານ ເພື່ອເຫດຜົນອີກ 8 ຢ່າງໃນການຈະລົງຄະແນນສຽງ YES.

## 1. ແນວຄວາມຄຶດນີ້ແມ່ນມາຈາກຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ໂດຍກົງ.

ການລົງຄະແນນສຽງ Yes ໝາຍຄວາມວ່າ:

- ສະໜັບສະໜູນຄວາມປາຖະໜາທີ່ສະເໜີໃຫ້ໂດຍຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ໃນຫຼາຍທົດສະວັດທີ່ຜ່ານມາ.
- ຍອມຮັບຂໍ້ສະເໜີທີ່ໄດ້ຮັບການສະໜັບສະໜຸນໂດຍຫຼາຍກວ່າ 80% ຂອງຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ

**ການຮຽກຮ້ອງໃຫ້ມີ Voice ບໍ່ໄດ້ມາຈາກນັກການເມືອງ.**

ໃນປີ 2017, ຫຼັງຈາກເວລາຫຼາຍປີຂອງການເຮັດວຽກແລະການສົນທະນານັບຄັ້ງບໍ່ຖ້ວນຢູ່ໃນທຸກພາກຂອງປະເທດ, ເກືອບ 250 ຜູ້ນຳແລະຜູ້ອາວຸໂສຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ໄດ້ຮັບຮອງເອົາຖະ*ແຫຼງການ ອູລູຣູ ຈາກໃຈ* (*Uluru Statement from the Heart*).

ຮຽກຮ້ອງໃຫ້ມີການຮັບຮູ້ຢູ່ໃນຣັດຖະທຳມະນູນຜ່ານ Voice.

ຂໍໃຫ້ພວກເຮົາຊ່ວຍເຮັດໃຫ້ມີການປ່ຽນແປງຕົວຈິງໃນຊີວິດຂອງເຂົາເຈົ້າ ແລະສ້າງໂອກາດທີ່ດີກວ່າສຳລັບລູກຂອງເຂົາເຈົ້າ.

> ຊາວອອສເຕຣເລັຍຈາກທຸກຊົນຊັ້ນ, ທຸກສາສະໜາ ແລະ ວັດທະນະທຳ ແລະ ທຸກດ້ານຂອງການເມືອງ ໄດ້ໃຫ້ການສະໜັບສະໜູນຂໍ້ສະເໜີນີ້.

ຕອນນີ້ພວກເຮົາສາມາດເຮັດໃຫ້ມັນເປັນຈິງໄດ້.

ການລົງຄະແນນສຽງ Yes ເປັນການສະແດງຄວາມສາມັກຄີທີ່ຈະເຮັດໃຫ້ຊາວອອສເຕຣເລັຍມາເຕົ້າໂຮມກັນ.

## 2. ການຮັບຮູ້ຣັດຖະທຳມະນູນເພື່ອໃຫ້ໄດ້ຮັບໝາກຜົນເປັນຮູບປະທຳ.

ການຮັບຮູ້ຣັດຖະທຳມະນູນແມ່ນຄຳຖະແຫຼງການທີ່ມີພະລັງທີ່ຈະຊຸກຍູ້ການປ່ຽນແປງຕົວຈິງ.

**ການລົງຄະແນນສຽງ Yes ໝາຍຄວາມວ່າ:**

- ການຮັບຮູ້ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ເປັນຊົນກຸ່ມທຳອິດຂອງອອສເຕຣເລັຍ.
- ສະເຫຼີມສະຫຼອງ ແລະ ແບ່ງປັນປະຫວັດສາດ 65,000 ປີ.
- ສົ່ງຂໍ້ຄວາມທີ່ມີພະລັງໄປທົ່ວໂລກກ່ຽວກັບຄວາມສາມັກຄີຂອງອອສເຕຣເລັຍ.
- ສ້າງຄວາມແຕກຕ່າງໃນພາກປະຕິບັດຕົວຈິງເພື່ອອະນາຄົດ.

ກໍລະນີ Yes
ມີຕໍ່ຢູ່
ໜ້າ14

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງໃຫ້ກົດໝາຍທີ່ສະເໜີມາ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**



# ກໍລະນີສຳລັບການລົງຄະແນນສຽງ No

**“ຂ້ອຍຄາດການໄດ້ວ່າການຟ້ອງຮ້ອງຕາມທາງກົດໝາຍຣັດຖະທຳມະນູນແລະກົດໝາຍວ່າດ້ວຍການປົກຄອງຈະເກີດຂຶ້ນຈາກ voice ນຶ່ງທົດສະວັດ ຫຼື ຫຼາຍກວ່ານັ້ນ ... ”**
(*Ian Callinan AC KC, ອະດີດຜູ້ພິພາກສາສານສູງ*)[1]

ນີ້ເປັນການ ຊອກຫາເລື່ອງ ທາງກົດໝາຍ.

## 2. ບໍ່ມີລາຍລະອຽດໃດໆ

ນີ້ແມ່ນການຕັດສິນໃຈຄັ້ງໃຫຍ່. ຢ່າງໃດກໍຕາມ, **ຣັດຖະບານຈະບໍ່ເປີດເຜີຍລາຍລະອຽດທີ່ສຳຄັນກ່ອນການລົງຄະແນນສຽງ**.

ພວກເຮົາບໍ່ຮູ້ວ່າມັນຈະຊ່ວຍຊຸມຊົນທີ່ດ້ອຍໂອກາດ ແລະ ປິດຊ່ອງຫວ່າງໄດ້ແນວໃດ.

ພວກເຮົາບໍ່ຮູ້ວ່າ Voice ນີ້ຈະມີສະມາຊິກຈັກຄົນ.

ພວກເຮົາບໍ່ຮູ້ວ່າເຂົາເຈົ້າຈະໄດ້ຮັບການເລືອກຕັ້ງ ຫຼື ຖືກເລືອກ ຫຼື ຈະເກີດຂຶ້ນແນວໃດ.

ພວກເຮົາບໍ່ຮູ້ວ່າກຸ່ມນີ້ຈະເປັນຕົວແທນ ຫຼື ຖືກກວດສອບໄດ້ແນວໃດ.

> ລາຍລະອຽດເຫຼົ່ານີ້ຈະຖືກນຳມາເບິ່ງທີລະຂັ້ນຕອນ ຫຼັງຈາກທີ່ຊາວອອສເຕຣເລັຍໄດ້ລົງຄະແນນສຽງໄປແລ້ວເທົ່ານັ້ນ.

ອີງຕາມການຣົນນະຣົງ Yes, ມັນ *“ບໍ່ມີຄວາມໝາຍ”* ທີ່ຈະຕ້ອງມີລາຍລະອຽດກ່ອນທີ່ຈະລົງຄະແນນສຽງ:

"ມັນບໍ່ມີຄວາມໝາຍຫຍັງເລີຍທີ່ຈະມີການປຶກສາຫາລືຢ່າງລະອຽດຈົນກວ່າພວກ ເຮົາໄດ້ຮັບການສະໜັບ ສະໜູນຈາກຊາວອອສເຕຣເລັຍໃນການປ່ຽນແປງຣັດຖະທຳມະນູນ."
(*ເຈັ້ຍໂບຣຊົວ Yes23 ອັນ*)

ນີ້ແມ່ນວິທີການທີ່ບໍ່ຖືກຕ້ອງ.

ທ່ານຈະບໍ່ຊື້ເຮືອນໂດຍບໍ່ໄດ້ກວດກາ ຫຼື ຊື້ລົດໂດຍບໍ່ມີການທົດສອບຂັບລອງເບິ່ງກ່ອນ.

ແຕ່ທ່ານໄດ້ຖືກຮ້ອງຂໍໃຫ້ລົງຄະແນນສຽງເພື່ອປ່ຽນແປງຣັດຖະທຳມະນູນຂອງ ພວກເຮົາໂດຍບໍ່ມີລາຍລະອຽດໃດໆ.

ຊາວອອສເຕຣເລັຍບໍ່ຄວນຖືກຮ້ອງຂໍໃຫ້ເຊັນຊື່ໃນໃບເຊັກເປົ່າ.

"ຊາວອອສເຕຣເລັຍຈະຕົກລົງເຫັນດີກັບສິ່ງທີ່ພວກເຮົາບໍ່ຮູ້ລາຍລະອຽດໄດ້ແນວ ໃດ?"
*(ສະມາຊິກສະພາສູງ Kerrynne Liddle, ຣັດຖະມົນຕຣີເງົາ ດ້ານການປົກປ້ອງເດັກແລະການປ້ອງກັນຄວາມຮຸນແຮງໃນຄອບຄົວແລະ ແມ່ຍິງ ຊາວ Arrernte*)

## 3. ມັນ ແບ່ງແຍກ ພວກເຮົາ

> ການເຮັດໃຫ້ອົງກອນໜຶ່ງປະດິດສະຖານຢູ່ໃນຣັດຖະທຳມະນູນຂອງພວກເຮົາເພື່ອຊາວອອສເຕຣເລັຍພຽງກຸ່ມດຽວເທົ່ານັ້ນ ໝາຍເຖິງການແບ່ງແຍກຊາວອອສເຕຣເລັຍຢ່າງຖາວອນ. ຊາວອອສເຕຣເລັຍພື້ນເມືອງຈຳນວນຫຼາຍບໍ່ເຫັນດີກັບເລື່ອງນີ້.

**“Voice ນີ້ຈະບໍ່ສາມາດລວມພວກເຮົາເຂົ້ານຳກັນ, ມັນຈະແບ່ງພວກເຮົາຕາມເຊື້ອຊາດ.”**
(*ສະມາຊິກສະພາສູງ Jacinta Nampijinpa Price, ຣັດຖະມົນຕຣີເງົາ ສຳລັບຊາວພື້ນເມືອງ ອອສເຕຣເລັຍ ແລະ ແມ່ຍິງ ເຜົ່າ Warlpiri*)

ສິ່ງນີ້ໄປຂັດກັບຫຼັກການສຳຄັນຂອງລະບົບປະຊາທິປະໄຕຂອງພວກເຮົາທີ່ຊາວ ອອສເຕຣເລັຍທຸກຄົນມີຄວາມເທົ່າທຽມກັນພາຍໃຕ້ກົດໝາຍ.

“ການລວມເອົາ s 129 ທີ່ຖືກສະເໜີໝາຍຄວາມວ່າພວກເຮົາກາຍເປັນຊາດນຶ່ງ ທີ່ເມື່ອໃດກໍ່ຕາມທີ່ພວກເຮົາຫຼືບັນພະບຸລຸດຂອງພວກເຮົາໄດ້ເຂົ້າມາໃນປະເທດນີ້ເປັນເທື່ອທຳອິດ, ພວກເຮົາທຸກຄົນບໍ່ເທົ່າທຽມກັນ.”
(*David Jackson AM KC, ອະດີດຜູ້ພິພາກສາສານຣັດຖະບານກາງ*)[2]

ຣັດຖະທຳມະນູນຂອງພວກເຮົາເປັນຂອງຊາວອອສເຕຣເລັຍທັງໝົດ. ຣັດຖະສະພາຂອງພວກເຮົາຢູ່ທີ່ນັ້ນເພື່ອເປັນຕົວແທນຂອງຊາວອອສເຕຣເລັຍໝົດທຸກຄົນ. ໃນປັດຈຸບັນມັນປະກອບມີສະມາຊິກສະພາ ແລະ ສະມາຊິກສະພາສູງທີ່ເປັນຊາວພື້ນເມືອງ 11ຄົນ.

1 ໜັງສືພິມ The Australian, 17/12/2022
2 ການຍື່ນສະເໜີການສອບຖາມຕໍ່ຣັດຖະສະພາ, ວັນທີ 11/04/2023

ກໍລະນີ No
ມີຕໍ່ຢູ່
ໜ້າ15

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງຄັດຄ້ານກົດໝາຍທີ່ສະເໜີ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**

ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ຫຼາຍຊົ່ວຄົນໄດ້ເສີມສ້າງປະເທດຊາດຂອງພວກເຮົາດ້ວຍວັດທະນະທຳ ແລະ ຄວາມຄິດສ້າງສັນ ຄວາມຮູ້ກ່ຽວກັບດິນແດນ ແລະ ນ້ຳ, ແລະ ການປະກອບສ່ວນຂອງເຂົາເຈົ້າຕໍ່ກັບການດຳລົງຊີວິດຂອງຊາວອອສເຕຣເລັຍ.

ທະວີບບູຮານຂອງພວກເຮົາເປັນທີ່ຕັ້ງຂອງວັດທະນະທຳທີ່ເກົ່າແກ່ທີ່ສຸດໃນໂລກ. ການຮັບຮູ້ເລື່ອງນີ້ຢູ່ໃນຣັດຖະທຳມະນູນຂອງພວກເຮົາແມ່ນເປັນວິທີການສ້າງແຮງບັນດານ ໃຈໃນການສະເຫຼີມສະຫຼອງປະຫວັດສາດທີ່ມີຮ່ວມກັນຂອງພວກເຮົາ.

ການລົງຄະແນນສຽງ Yes ເປັນການປະຕິບັດການປອງດອງກັນທີ່ຈະໄດ້ຮັບຜົນທີ່ແທ້ຈິງ.

| |
|---|
| ຮູບແບບການຮັບຮູ້ຊາວອອສເຕຣເລັຍພື້ນເມືອງແມ່ນການຮ້ອງຂໍໃຫ້ພວກເຮົາສະໜັບສະໜູນ ຄື Voice. ຍານພາຫະນະສຳລັບການປ່ຽນແປງຕົວຈິງ. |

**Johnathan Thurston, ແຊ້ມ NRL ແລະ ໂຄຊ໌, ເປັນຄົນເຜົ່າ Gunggari:**
*"ເຍົາວະຊົນຂອງພວກເຮົາສົມຄວນໄດ້ຮັບໂອກາດທີ່ຈະເຮັດໃຫ້ດີທີ່ສຸດ. ຂ້ອຍເຮັດວຽກຢ່າງໃກ້ຊິດກັບເດັກນ້ອຍນັກຮຽນໃນຊຸມຊົນ Yarrabah ໃນຄວີນສແລນດ໌. ຂ້ອຍໄດ້ເຫັນອຸປະສັກທີ່ພວກເຂົາປະເຊີນ. ບໍ່ມີໃຜເຂົ້າໃຈໄດ້ດີກວ່າຊຸມຊົນທ້ອງຖິ່ນຂອງເຂົາເຈົ້າ. ການໃຫ້ພວກເຂົາເຈົ້າມີສິດປາກເວົ້າຈະໝາຍເຖິງລູກຫຼານຂອງພວກເຮົາເຂົ້າເຖິງສັກກະຍາ ພາບຂອງເຂົາເຈົ້າໄດ້ຫຼາຍຂຶ້ນ. ນັ້ນແມ່ນສິ່ງທີ່ Voice ເປັນ."*

## 3. ຮັບປະກັນໃຫ້ປະຊາຊົນມີຊີວິດທີ່ດີຂຶ້ນ.

Voice ແມ່ນພາຫະນະທີ່ມອບສົ່ງການປັບປຸງຢ່າງແທ້ຈິງສຳລັບຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ໃນ:

- ອາຍຸໄຂ.
- ອັດຕາການຕາຍ ແລະ ສຸຂະພາບຂອງເດັກ.
- ການສຶກສາ ແລະ ການຈ້າງງານ.

ເປັນເວລາດົນນານແລ້ວທີ່ຣັດຖະບານທີ່ມີເຈດຕະນາດີໄດ້ໃຊ້ເງິນຫຼາຍຕື້ເພື່ອພະຍາຍາມແກ້ ໄຂບັນຫາເຫຼົ່ານີ້.

ແຕ່ເຂົາເຈົ້າບໍ່ໄດ້ປະສົບຜົນສຳເລັດໃນການປັບປຸງທີ່ຍືນຍົງເນື່ອງຈາກວ່າເຂົາເຈົ້າບໍ່ໄດ້ຮັບຟັງຄົນໃນພື້ນທີ່.

ວິທີການໃນປະຈຸບັນແມ່ນແຕກຫັກແລະ Voice ແມ່ນໂອກາດທີ່ດີທີ່ສຸດຂອງພວກເຮົາໃນການແກ້ໄຂມັນ.

ບໍ່ມີໃຜຄິດວ່າ Voice ຈະແກ້ບັນຫາທຸກຢ່າງໄດ້ທັນທີ ແຕ່ໃນທີ່ສຸດພວກເຮົາຈະມີວິທີການທີ່ຖືກຕ້ອງ.

**ນີ້ແມ່ນສາມຕົວຢ່າງທີ່ການຮັບຟັງຊາວພື້ນເມືອງໄດ້ສົ່ງມອບຜົນຮັບທີ່ດີກວ່າ.**

**ລອງນຶກວາດພາບຄວາມກ້າວໜ້າຂອງອອສເຕຣເລັຍທີ່ສາມາດເຮັດໄດ້ດ້ວຍ VOICE.**

### ການຮັບຟັງແມ່ນໄດ້ຜົນ: ການບໍລິການສຸຂະພາບທີ່ດີຂຶ້ນ

ການບໍລິການທາງການແພດຂອງຊາວອາບໍຣິຈິໂນລທີ່ຄວບຄຸມໂດຍຊຸມຊົນວ່າຈ້າງຄົນພື້ນ ເມືອງໃນທ້ອງຖິ່ນເຮັດວຽກ.

ພວກເຂົາເຈົ້າດຳເນີນການຢູ່ຄລີນິກແລະໄປຢ້ຽມ ຢາມເຂດຫ່າງໄກສອກຫຼີກ, ໃຫ້ການບໍລິການທີ່ຈຳເປັນເຊັ່ນ: ການສັກຢາປ້ອງກັນພະຍາດໃຫ້ເດັກ.

ໃນພາກຕາເວັນອອກສຽງໃຕ້ຂອງຄວີນສແລນດ໌ ການບໍລິການທາງການແພດຂອງຊາວອາບໍຣິຈິໂນລໃນທ້ອງຖິ່ນແລະຊຸມຊົນໄດ້ເຮັດວຽກ ຮ່ວມກັນເພື່ອເພີ່ມຈຳນວນການກວດສຸຂະພາບປະຈຳປີຢ່າງຫຼວງຫຼາຍ, ຈາກ 550 ຄັ້ງ ເປັນຫຼາຍກວ່າ 20,000 ຄັ້ງໃນລະຍະເວລາ 10 ປີ.

### ການຮັບຟັງແມ່ນໄດ້ຜົນ: ຜົນໄດ້ຮັບດີຂຶ້ນໃນດ້ານການສຶກສາ

ຄອບຄົວແລະຜູ້ນຳຊຸມຊົນໄດ້ມີສ່ວນຮ່ວມໃນທຸກຂັ້ນຕອນຂອງໂຮງຮຽນ Dhupuma Barker ແຫ່ງໃໝ່ໃນ Arnhem Land, ຕັ້ງແຕ່ການວາງແຜນບົດຮຽນໄປຈົນເຖິງເຄື່ອງແບບແລະອາຫານທ່ຽງ.

ການຮ່ວມມືທີ່ແທ້ຈິງໄດ້ຊຸກຍູ້ອັດຕາ**ການເຂົ້າໂຮງຮຽນທີ່ເຂັ້ມແຂງແລະຜົນໄດ້ຮັບທີ່ດີຂຶ້ນ**. ທີມ Robotics 'Dhupuma Firebirds' ເມື່ອບໍ່ດົນມານີ້ໄດ້ເຂົ້າຮ່ວມການແຂ່ງຂັນ VEX International Championships ໃນ ຣັດ ເທັກຊັສ ເຊິ່ງເປັນທີມທຳອິດຈາກ Northern Territory ທີ່ໄດ້ຜ່ານເຂົ້າຮອບ.

ທ່ານຄູໃຫຍ່ Phillip Heath ເວົ້າວ່າ:
*"ການຮັບຟັງຊຸມຊົນແມ່ນການປ່ຽນເກມໃນການສຶກສາລະດັບພູມິພາກແລະຫ່າງໄກສອກຫຼີກ."*

### ການຮັບຟັງແມ່ນໄດ້ຜົນ: ເຈົ້າໜ້າທີ່ຮັກສາປ່າ ພື້ນເມືອງ

ມີເຈົ້າໜ້າທີ່ຮັກສາປ່າຊົນເຜົ່າພື້ນເມືອງເກືອບ 2,000 ຄົນເຮັດວຽກຢູ່ໃນປະເທດ.

ກໍລະນີ Yes ມີຕໍ່ຢູ່ ໜ້າ16

**ໃຜຂຽນເລື່ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່** aec.gov.au/referendums/pamphlet.htm**) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງໃຫ້ກົດໝາຍທີ່ສະເໜີມາ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**





ເພງຊາດຂອງພວກເຮົາໄດ້ຖືກປ່ຽນແປງເມື່ອບໍ່ດົນມານີ້ເພື່ອສະທ້ອນໃຫ້ເຫັນຄວາມຈິງທີ່ວ່າພວກເຮົາເປັນ "ນຶ່ງດຽວແລະເປັນອິດສະຫຼະ".

**ໃນທາງກົງກັນຂ້າມ, Voice ນີ້ຈະແບ່ງແຍກຊາວອອສເຕຣເລັຍອອກຢ່າງຖາວອນ ທັງໃນດ້ານກົດໝາຍ ແລະ ຈິດວິນຍານ.**

"ພວກເຮົາທັງໝົດແມ່ນຄົນອອສເຕຣເລັຍ ແລະ ນັ້ນແມ່ນວິທີທີ່ມັນຄວນຈະສິ້ນສຸດລົງ. ມັນບໍ່ຄວນຖືກແບ່ງແຍກໂດຍສິ່ງທີ່ເອີ້ນວ່າ Voice ຊຶ່ງພວມຈະແຍກປະເທດນີ້ອອກຈາກໃຈກາງ."
(*Ian Conway, ຜູ້ດູແລອາວຸໂສ Central Arrernte*)

## 4. ມັນຈະບໍ່ຊ່ວຍຊາວອອສເຕຣເລັຍພື້ນເມືອງ

ພວກເຮົາທຸກຄົນຕ້ອງການຊ່ວຍເຫຼືອຊາວອອສເຕຣເລັຍພື້ນເມືອງໃນຊຸມຊົນທີ່ດ້ອຍໂອກາດເພື່ອປິດຊ່ອງຫວ່າງແລະບັນລຸຄວາມປອງດອງ.

**ຢ່າງໃດກໍຕາມລະບົບຣາດຊະການ ທີ່ຫຼາຍຂຶ້ນບໍ່ແມ່ນຄຳຕອບ.**

ປະຈຸບັນນີ້ມີອົງການຜູ້ຕາງໜ້າຊາວພື້ນເມືອງຫຼາຍຮ້ອຍອົງການຢູ່ທຸກລະດັບຂອງຣັດຖະບານ ພ້ອມກັບອົງການຊົນເຜົ່າພື້ນເມືອງແຫ່ງຊາດອອສເຕຣເລັຍ ເຊິ່ງມີເຈົ້າໜ້າທີ່ 1,400 ຄົນ.

Voice ທີ່ເປັນສູນກາງມີຄວາມສ່ຽງທີ່ຈະມອງຂ້າມຄວາມຕ້ອງການຂອງຊຸມຊົນໃນລະດັບພາກພື້ນ ແລະ ຫ່າງໄກສອກຫຼີກ.

"Voice ແຫ່ງຊາດບໍ່ສາມາດເວົ້າແທນປະເທດໄດ້."
(*Nyunggai Warren Mundine AO, ສະມາຊິກຄະນະກຳມະການ Australia for Unity ແລະ ຄົນເຜົ່າ Bundjalung*)

ຂະນະນີ້ ມີຫຼາຍສຽງຮຽກຮ້ອງອອກມາເພື່ອຂໍຄວາມຊ່ວຍເຫຼືອໃນການແກ້ໄຂບັນຫາສັງຄົມທີ່ທຳລາຍໃນຊຸມຊົນຫ່າງໄກສອກຫຼີກບາງແຫ່ງ. ສິ່ງທີ່ຕ້ອງການແມ່ນການປະຕິບັດ.

**"ສິ່ງທີ່ພວກເຮົາຕ້ອງການໃນ ແຄນເບີຣາ ແມ່ນຫູ, ບໍ່ແມ່ນ Voice."**
(*ສະມາຊິກສະພາສູງ Jacinta Nampijinpa Price, ຣັດຖະມົນຕຣີເງົາ ສຳລັບຊາວພື້ນເມືອງ ອອສເຕຣເລັຍ ແລະ ແມ່ຍິງ ເຜົ່າ Warlpiri* )

## 5. ບໍ່ມີບັນຫາໃດຢູ່ນອກເໜືອຂອບເຂດ

ຮູບແບບຂອງ Voice ນີ້ບໍ່ແມ່ນພຽງແຕ່ສຳລັບຣັດຖະສະພາເທົ່ານັ້ນ ແຕ່ມັນໄປຫຼາຍກວ່ານັ້ນຫຼາຍ - ໄປສູ່ທຸກຂົງເຂດຂອງ "ຣັດຖະບານບໍລິຫານ". **ນັ້ນລວມມີບັນດາພະແນກການຂອງຣັດຖະບານ, ອົງການ ແລະ ໜ່ວຍງານອື່ນໆທັງໝົດ (ເຊັ່ນ: ທະນາຄານກາງ).**

ການຕັດສິນໃຈກ່ຽວກັບເສດຖະກິດ, ຄວາມໝັ້ນຄົງແຫ່ງຊາດ, ພື້ນຖານໂຄງລ່າງ, ສາທາລະນະສຸກ, ການສຶກສາ ແລະ ອື່ນໆ, ຈະຢູ່ໃນຂອບເຂດຂອງມັນ.

ໃນຄຳເວົ້າຂອງສະມາຊິກຄະນະປະຕິບັດງານການລົງປະຊາມະຕິຂອງຣັດຖະບານທ່ານນຶ່ງ:

"Voice ຈະສາມາດເວົ້າກັບທຸກພາກສ່ວນຂອງຣັດຖະບານ ລວມທັງຄະນະຣັດຖະບານ, ຣັດຖະມົນຕຣີ, ຂ້າຣາດຊະການ, ແລະ ສຳນັກງານກົດໝາຍ ແລະ ອົງການອິດສະຫຼະຕ່າງໆ - ເຊັ່ນທະນາຄານກາງ ... ມັນບໍ່ສາມາດປິດສຽງໄດ້."
(*ສາດສະດາຈານ Megan Davis ແລະ Gabrielle Appleby*)[3]

ຕາມຄຳເວົ້າ ຂອງ ສາດສະດາຈານ ດ້ານກົດໝາຍຣັດຖະທຳມະນູນ ຜູ້ທີ່ໃຫ້ການສະໜັບສະໜູນ Voice:

"ຂ້າພະເຈົ້າຄິດວ່າມັນມີຂໍ້ບົກພ່ອງຢ່າງຮ້າຍແຮງເພາະວ່າສິ່ງທີ່ມັນເຮັດນັ້ນແມ່ນຍັງເກັບຮັກສາການທົບທວນການດຳເນີນການບໍລິຫານຢ່າງເຕັມຮູບແບບ. ນີ້ໝາຍຄວາມວ່າ Voice ສາມາດສະແດງຄວາມຄຳເຫັນກ່ຽວກັບທຸກຢ່າງຕັ້ງແຕ່ເຮືອດຳນ້ຳ ໄປຈົນຮອດປີ້ຈອດລົດ... ພວກເຮົາຈະມີການແຊກແຊງທາງຕຸລາການເປັນປະຈຳ."
(*ສາດສະດາຈານ Greg Craven AO*)[4]

ຜູ້ຊ່ຽວຊານດ້ານກົດໝາຍຫຼາຍຄົນໄດ້ສະແດງຄວາມເປັນຫ່ວງກ່ຽວກັບຂອບເຂດ ຂອງມັນ, ແຕ່ຄວາມເປັນຫ່ວງຂອງເຂົາເຈົ້າກັບຖືກມອງຂ້າມ.

## 6. ມັນມີຄວາມສ່ຽງຕໍ່ການຊັກຊ້າແລະເຮັດວຽກຜິດພາດ

ຣັດຖະສະພາອອສເຕຣເລັຍຈັດການກັບກົດໝາຍຫຼາຍຮ້ອຍສະບັບຕໍ່ປີ.

ຂອບເຂດຂອງ Voice ນີ້ຄອບຄຸມຫຼາຍກວ່າຣັດຖະສະພາ ກວມເອົາບັນດາກະຊວງ, ໜ່ວຍງານ ແລະ ທຸກຂົງເຂດຂອງ "ຣັດຖະບານບໍລິຫານ".

Voice ຈະຈັດການກັບສິ່ງນີ້ແນວໃດ?

**ຖ້າ Voice ບໍ່ພໍໃຈກັບວິທີການປຶກສາຫາລື ຫຼື ການຕັດສິນໃຈທີ່ເກີດຂຶ້ນ ກໍສາມາດຍື່ນອຸທອນຕໍ່ສານໄດ້. ອັນນີ້ຈະໃຊ້ເວລາດົນປານໃດ?**

---

3 ໜັງສືພິມ The Australian ວັນທີ 1/4/2023
4 ໜັງສືພິມ Daily Mail, ວັນທີ 24/3/2023

ກໍລະນີ No ມີຕໍ່ຢູ່ ໜ້າ17

**ໃຜຂຽນເລື່ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່** aec.gov.au/referendums/pamphlet.htm**) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງຄັດຄ້ານກົດໝາຍທີ່ສະເໜີ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແພ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**

ເຈົ້າໜ້າທີ່ຮັກສາປ່າ ເບິ່ງແຍງສະພາບແວດລ້ອມຂອງພວກເຮົາ**ໂດຍການເຮັດວຽກເພື່ອປ້ອງກັນໄຟໄຫມ້ປ່າ ຄວບຄຸມສັດຕູພືດທີ່ຮ້າຍກາດແລະປັບປຸງສຸຂະພາບຂອງແມ່ນ້ຳຂອງພວກເຮົາ.**

ການຮັບຟັງ ເຈົ້າໜ້າທີ່ຮັກສາປ່າ ຊົນເຜົ່າພື້ນເມືອງໝາຍເຖິງການແບ່ງປັນຄວາມຮູ້ 65,000 ປີແລະການເຊື່ອມຕໍ່ກັບດິນແລະນ້ຳຂອງພວກເຮົາ.

**ລົງຄະແນນສຽງ Yes ເພື່ອຜົນໄດ້ຮັບທີ່ດີກວ່າທົ່ວອອສເຕຣເລັຍ.**

**ລົງຄະແນນສຽງ Yes ເພື່ອຊ່ວຍປິດຊ່ອງຫວ່າງ.**

## 4. ນໍາເອົາປະເທດເຮົາມາຮວມເຂົ້າກັນ.

ການລົງຄະແນນ Yes ໝາຍຄວາມວ່າ:

- ກາຍເປັນຄືນດີກັບອະດີດຂອງເຮົາ ແລະ ກ້າວໄປສູ່ອະນາຄົດທີ່ດີກວ່າ.
- ການປ່ຽນແປງທີ່ທ່ານເທົ່ານັ້ນສາມາດເຮັດໃຫ້ເກີດຂຶ້ນ.

ອອສເຕຣເລັຍໄດ້ກ້າວມາໄກຕັ້ງແຕ່ຣັດຖະທໍາມະນູນຂອງພວກເຮົາມີຜົນບັງຄັບໃຊ້ໃນປີ 1901.

ດຽວນີ້ພວກເຮົາສະເຫຼີມສະຫຼອງຊາວພື້ນເມືອງ ອອສເຕຣເລັຍ ແລະ ການປະກອບສ່ວນຂອງເຂົາເຈົ້າຕໍ່ກັບປະເທດຂອງພວກເຮົາຢ່າງຖືກຕ້ອງ.

ໃນການລົງປະຊາມະຕິໃນປີ 1967, 90% ຂອງຊາວອອສເຕຣເລັຍໄດ້ລົງຄະແນນສຽງ Yes ເພື່ອປ່ຽນແປງຣັດຖະທໍາມະນູນ, ເພື່ອໃຫ້ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ຈະໄດ້ຖືກນັບເຂົ້າໃນຈໍານວນປະຊາກອນຄືກັນກັບຄົນອື່ນໆ.

ມັນເປັນການກ້າວໄປຂ້າງໜ້າຮ່ວມກັນ.

ພວກເຮົາມີໂອກາດທີ່ຈະກ້າວຕໍ່ໄປອີກຂັ້ນນຶ່ງດ້ວຍການຮ່ວມກັນຮັບຮູ້ ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ໂດຍຜ່ານ Voice.

ປະເທດອື່ນໆທີ່ມີປະຫວັດສາດທີ່ຄ້າຍຄືກັນເຊັ່ນການາດາແລະນິວຊີແລນດ໌ ໄດ້ຮັບຮູ້ຊົນກຸ່ມທໍາອິດຂອງຕົນເອງໃນຫຼາຍທົດສະວັດທີ່ຜ່ານມາ.

**ປະສົບການສະແດງໃຫ້ເຫັນວ່າບໍ່ມີຫຍັງທີ່ຈະຕ້ອງຢ້ານກົວ - ແລະມີຫຼວງຫຼາຍທີ່ຈະໄດ້ຮັບ.**

> **Rachel Perkins, ຜູ້ສ້າງຮູບເງົາຈາກ Alice Springs, ແມ່ຍິງເຜົ່າ Arrernte / Kalkadoon:**
> *“ຄົນຂອງພວກເຮົາໄດ້ໃຊ້ເວລາຫຼາຍທົດສະວັດໃນການຣົນນະຣົງເພື່ອໂອກາດຂອງຊີວິດທີ່ດີຂຶ້ນ. ພວກເຮົາບໍ່ເຄີຍມີຄວາມຕັ້ງໃຈຫຼືເປັນນໍ້ານຶ່ງໃຈດຽວກັນຫຼາຍກວ່ານີ້ອີກແລ້ວ. Voice ແມ່ນຄວາມພະຍາຍາມທີ່ດີທີ່ສຸດຂອງພວກເຮົາ, ມາຮັບເອົາເຖີດ."*

## 5. ປະຢັດເງິນ.

ເມື່ອຣັດຖະບານຮັບຟັງປະຊາຊົນ ພວກເຂົາໄດ້ຜົນ ຮັບທີ່ດີຂຶ້ນແລະນໍາໃຊ້ເງິນທຶນຢ່າງມີປະສິດທິພາບຫຼາຍຂຶ້ນ.

> **ປ້າ Pat Anderson AO, ປະທານຮ່ວມຂອງ Uluru Dialogues, ແມ່ຍິງເຜົ່າ Alyaware**:
> *"ໃນເວລາທີ່ທ່ານນໍາເອົາຜູ້ຄົນເຂົ້າມາຮ່ວມ, ທ່ານຈະຕັດສິນໃຈໄດ້ດີກວ່າແລະເງິນທີ່ທ່ານໃຊ້ໄປຈະຢູ່ບ່ອນທີ່ມັນຕ້ອງການທີ່ສຸດ: ກັບປະຊາຊົນໃນພື້ນທີ່."*

ຣັດຖະບານຂອງທັງສອງຝ່າຍໄດ້ລົງທຶນຫຼາຍຕື້ໃນໂຄງການທີ່ບໍ່ໄດ້ແກ້ໄຂບັນຫາຫຼືເຂົ້າເຖິງ ຊຸມຊົນ.

Voice ຈະຊ່ວຍໃຫ້ພວກເຮົາຟັງຄົນໃນທ້ອງຖິ່ນ ແລະ ປະຢັດເງິນ.

ພວກເຮົາທຸກຄົນຈະດີຂຶ້ນເມື່ອຣັດຖະບານບໍ່ຕ້ອງເສັຍເງິນພາສີໃຫ້ກັບສິ່ງທີ່ບໍ່ໄດ້ຜົນ.

## 6. ເຖິງເວລາແລ້ວ.

ແນວຄິດເລື້ອງ Voice ໄດ້ຢູ່ໃນລະຫວ່າງການສ້າງມາເປັນເວລາຫຼາຍທົດສະວັດແລ້ວ. ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ຫຼາຍຄົນໄດ້ເອົາໃຈໃສ່ເຮັດວຽກໜັກແລະມີຄວາມປາຖະໜາດີ ໃນເລື່ອງນີ້.

ການລົງຄະແນນສຽງ No ໝາຍຄວາມວ່າຈະບໍ່ມີຫຍັງປ່ຽນແປງ. ມັນໝາຍເຖິງການຍອມຮັບວ່າພວກເຮົາບໍ່ສາມາດເຮັດໄດ້ດີກວ່ານີ້.

**ຢ່າສ່ຽງກັບສິ່ງດຽວກັນຫຼາຍກວ່ານີ້:**

- ອາຍຸໄຂຂີ້ຮ້າຍຂຶ້ນ.
- ຜົນຮັບດ້ານການສຶກສາ ແລະວຽກເຮັດງານທໍາຂີ້ຮ້າຍຂຶ້ນ.
- ຜົນໄດ້ຮັບດ້ານສຸຂະພາບຂີ້ຮ້າຍຂຶ້ນ.

ລົງຄະແນນສຽງ Yes ເພື່ອທໍາລາຍວົງຈອນນີ້ ແລະ ລວມຊາດຂອງພວກເຮົາໃຫ້ເປັນອັນນຶ່ງອັນດຽວກັນ.

ກໍລະນີ Yes
ມີຕໍ່ຢູ່
ໜ້າ18

**ໃຜຂຽນເລື້ອງນີ້?**

**ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງໃຫ້ກົດໝາຍທີ່ສະເໜີມາ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແຜ່ມາໂດຍບໍ່ມີການດັດແກ້ໂດຍຄະນະກໍາມະການເລືອກຕັ້ງ.**





ຜູ້ຊ່ຽວຊານດ້ານກົດໝາຍຫຼາຍຄົນໄດ້ເຕືອນວ່າສິ່ງນີ້ຈະເຮັດໃຫ້ເກີດຄວາມຊັກຊ້າຫຼາຍໃນການຕັດສິນໃຈ.

> “Voice ເກືອບຈະກາຍເປັນສາຍຟ້າຜ່າສໍາລັບການໂຕ້ວາທີທີ່ຍືດເຍື້ອກ່ຽວກັບບັນຫາຈໍາ ນວນຫຼາຍໃນປະຈຸບັນ. ເກືອບທຸກເລື່ອງຂອງຂໍ້ກັງວົນໃນປັດຈຸບັນຢູ່ໃນວາລະແຫ່ງຊາດຈະຖືກເຫັນວ່າມີ ສ່ວນປະກອບບາງປະເພດຂອງຊົນເຜົ່າພື້ນເມືອງ.”
> (*Nicholas Hasluck AM KC, ອະດີດຜູ້ພິພາກສາສານສູງສຸດ WA*)[5]

ຄວາມສ່ຽງຕໍ່ການອຸທອນທາງກົດໝາຍ ແລະ ຄວາມລ່າຊ້າ ໝາຍເຖິງຄວາມສ່ຽງຕໍ່ການລົ້ມເຫຼວຂອງຣັດຖະບານ.

ນັ້ນແມ່ນບໍ່ດີສໍາລັບອອສເຕຣເລັຍ.

## 7. ມັນເປີດປະຕູໃຫ້ນັກເຄື່ອນໄຫວ

ຄວາມບໍ່ແນ່ນອນທາງດ້ານກົດໝາຍ ແລະ ການບໍ່ມີລາຍລະອຽດ ເຮັດໃຫ້ເກີດຄໍາຖາມວ່າ: ຕໍ່ໄປຈະເກີດຫຍັງຂຶ້ນ?

| |
|---|
| ຜູ້ສະໜັບສະໜຸນ Voice ບາງຄົນເວົ້າແບບກົງໄປກົງມາວ່າ Voice ນີ້ຈະເປັນບາດກ້າວທໍາອິດຕໍ່ການຊົດເຊີຍ ແລະ ການຊົດໃຊ້ຄ່າເສັຍຫາຍ ແລະ ການປ່ຽນແປງທີ່ຮຸນແຮງອື່ນໆ. |

> "ນີ້ແມ່ນບາດກ້າວທໍາອິດ, ມັນເປັນບາດກ້າວທີ່ສໍາຄັນ ແລະ ເອົາການອະທິບາຍທັງໝົດໄວ້ຢູ່ເບື້ອງຫຼັງ ຕົວຢ່າງ 'ຈ່າຍຄ່າເຊົ່າ' ພວກເຮົາຈະເຮັດໃນລັກສະນະທີ່ໂປ່ງໃສໄດ້ແນວໃດແລະເຫັນວ່າການຊົດເຊີຍ ແລະການຊົດໃຊ້ຄ່າເສັຍຫາຍແກ່ຊາວອາບໍຣິຈິໂນລ ແລະ ທໍເຣັສເທຣດໄອແລນເດີ ຢ່າງແທ້ຈິງໄດ້ແນວໃດ...?”
> (*Thomas Mayo, ຄະນະເຮັດວຽກການລົງປະຊາມະຕິ* )[6]

ຖະແຫຼງການອູລາຣູ ຈາກຫົວໃຈ (Uluru Statement from the Heart ) ກ່າວວ່າ Voice ເປັນບາດກ້າວທໍາອິດກ່ອນທີ່ຈະມີສົນທິສັນຍາແລະການບອກຄວາມຈິງ.

ຕາມຄໍານິຍາມ ສົນທິສັນຍາແມ່ນຂໍ້ຕົກລົງລະຫວ່າງຣັດຖະບານ ບໍ່ແມ່ນລະຫວ່າງພົນລະເມືອງກຸ່ມດຽວກັບຣັດຖະບານຂອງຕົນ.

ສະມາຊິກຄົນນຶ່ງຂອງຄະນະກໍາມະການລົງປະຊາມະຕິຂອງຣັດຖະບານໄດ້ອະທິ ບາຍວ່າ "ຄວາມຈິງ" ເປັນ "ອິດທິພົນ" ເພື່ອນໍາໄປສູ່ "ການຍົກເລີກສະຖາບັນອານານິຄົມເກົ່າ".

> "ມັນເປັນວິທີທີ່ຈະສົ່ງເສີມສິ່ງທີ່ພວກເຮົາຕ້ອງການສໍາລັບປະຊາຊົນຂອງພວກເຮົາໃນການເຈລະຈາຕໍ່ລອງໃດໆສໍາລັບສົນທິສັນຍາແລະສິ່ງອື່ນໆເຊັ່ນ: ການອອກກົດໝາຍ ການປະຕິຮູບແລະການຍົກເລີກສະຖາບັນ ຊຶ່ງເປັນສະຖາບັນອານານິຄົມເກົ່າທີ່ເປັນອັນຕະລາຍຕໍ່ພວກເຮົາ."
> (*Thomas Mayo, ຄະນະເຮັດວຽກການລົງປະຊາມະຕິ* )[7]

ດັ່ງທີ່ໄດ້ເກີດຂຶ້ນແລ້ວ, ນັກເຄື່ອນໄຫວຫຼາຍຄົນກໍາລັງຣົນນະຣົງເພື່ອໃຫ້**ຍົກເລີກວັນຊາດອອສເຕຣເລັຍ, ປ່ຽນທຸງຂອງພວກເຮົາແລະສະຖາບັນອື່ນໆແລະສັນຍາລັກ**ທີ່ສໍາຄັນຕໍ່ຊາວອອສເຕຣເລັຍ.

> “ມັນເປັນ #abolishAustraliaDay ສະເໜີມາ, ການປ່ຽນແປງວັນທີຖືເປັນການຫຼົບຫຼີກ.”
> (*Teela Reid, ກຸ່ມພົວພັນການລົງປະຊາມະຕິ*)[8]

ຖ້າຫາກວ່າຣັດຖະທໍາມະນູນເອົາ Voice ຂຶ້ນມາປະດິດສະຖານ ສຽງຮຽກຮ້ອງເຫຼົ່ານີ້ກໍຈະດັງຂຶ້ນ.

> “ຊາວອອສເຕຣເລັຍຕ້ອງເຂົ້າໃຈວ່າ Voice ຈະຖືກນໍາໃຊ້ເພື່ອສະໜັບສະໜູນການຮຽກຮ້ອງໃຫ້ມີການຮັບຮູ້ອະທິປະໄຕທີ່ຢູ່ ຄຽງກັນ, ຄະນະກໍາມາທິການ Makarrata ອອກແບບມາເພື່ອຈັດທໍາສົນທິສັນຍາແລະການຊົດເຊີຍທາງດ້ານການເງິນ ແລະ ການຂຽນປະຫວັດສາດຂອງອອສເຕຣເລັຍຂຶ້ນໃໝ່... ໂອກາດທີ່ຈະເກີດຄວາມເສັຍຫາຍອັນໃຫຍ່ຫຼວງທີ່ບໍ່ສາມາດແກ້ໄຂໄດ້ຕໍ່ສັງຄົມ ອອສເຕຣເລັຍໝາຍຄວາມວ່າ voice ບໍ່ຄວນຖືກລວມເຂົ້າໃນຣັດຖະທໍາມະນູນຂອງອອສເຕຣເລັຍເລີຍ…”
> (*Terence Cole AO RFD KC, ອະດີດຜູ້ພິພາກສາສານສູງສຸດ NSW*)[9]

## 8. ມັນຈະມີຄ່າໃຊ້ຈ່າຍສູງ ແລະ ເປັນລະບົບຣາດຊະການ

ພວກເຮົາບໍ່ຮູ້ວ່າຈະໄດ້ຮັບການຈັດສັນເງິນທຶນເພີ່ມເຕີມເທົ່າໃດໃຫ້ແກ່ Voice ນີ້.

ນັ້ນແມ່ນລາຍລະອຽດອີກອັນນຶ່ງທີ່ຈະຖືກກໍານົດຫຼັງຈາກການລົງປະຊາມະຕິເທົ່ານັ້ນ.

---

5 ການຍື່ນສະເໜີການສອບສວນຂອງຣັດຖະສະພາ, ວັນທີ 16/4/2023
6 ຄໍາປາໄສຂອງມູນນິທິ SEARCH ວັນທີ 12/2/2020
7 ຄໍາປາໄສຂອງມູນນິທິ SEARCH ວັນທີ 12/2/2020
8 Twitter ວັນທີ 24/1/2023
9 ນິດຕະຍະສານ Spectator Australia, ວັນທີ 6/4/2023; ການຍື່ນສະເໜີການສອບຖາມຕໍ່ຣັດຖະສະພາ, ວັນທີ 19/4/2023

ກໍລະນີ No
ມີຕໍ່ຢູ່
ໜ້າ19

**ໃຜຂຽນເລື້ອງນີ້?**

**ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງຄັດຄ້ານກົດໝາຍທີ່ສະເໜີ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແຜ່ມາໂດຍບໍ່ມີການດັດແກ້ໂດຍຄະນະກໍາມະການເລືອກຕັ້ງ.**

**Eddie Betts, ນັກກິລາ ຫຼິ້ນບານ AFL ທີ່ມີຊື່ສຽງຂອງທີມ Adelaide ແລະ Carlton, ຄົນເຜົ່າ Gubrun, Wirangu/Kokatha:**
*"ຂ້ອຍຮູ້ວ່າ Voice ຈະບໍ່ແກ້ໄຂທຸກຢ່າງໃນຄືນດຽວແຕ່ຂ້ອຍຮູ້ສຶກວ່າ ມັນເປັນການ ເປີດເສັ້ນທາງເພື່ອໃຫ້ ແນ່ໃຈ ວ່າພວກເຮົາຖືກລວມເຂົ້າກັນແລະເຄົາລົບໃນການຕັດສິນໃຈກ່ຽວກັບບັນຫາທີ່ສົ່ງຜົນ ກະທົບຕໍ່ ພວກເຮົາ."*

## 7. ຄຳແນະນຳການປະຕິບັດຕົວຈິງທີ່ເຮັດວຽກໄດ້ຜົນ.

Voice ຈະໃຫ້ຄຳແນະນຳກ່ຽວກັບຂັ້ນຕອນການປະຕິບັດຕົວຈິງເພື່ອປັບປຸງສຸຂະພາບ, ການສຶກສາ, ການຈ້າງງານ ແລະ ທີ່ຢູ່ອາໄສຂອງຊົນເຜົ່າພື້ນເມືອງ.

ການເອົາ Voice ເຂົ້າໃນຣັດຖະທຳມະນູນເຮັດໃຫ້ມັນມີສະຖຽນລະພາບ ແລະ ເປັນອິດສະລະທັງ ໃນປະຈຸບັນ ແລະ ອະນາຄົດ.

ນີ້ໝາຍຄວາມວ່າ Voice ສາມາດໃຫ້ຄຳແນະນຳທີ່ກົງໄປກົງມາ, ໂດຍບໍ່ຕ້ອງຫຍຸ້ງກ່ຽວໃນດ້ານການເມືອງໃນລະຍະສັ້ນ.

**ພວກເຮົາບໍ່ສາມາດແກ້ໄຂສິ່ງທ້າທາຍທັງໝົດທີ່ຊາວພື້ນເມືອງອອສເຕຣເລັຍປະເຊີນໜ້າໄດ້ໃນຄືນດຽວ. ພວກເຮົາຕ້ອງການການດຳເນີນການໃນຂະນະນີ້, ເຊັ່ນດຽວກັນກັບການວາງແຜນສຳລັບລະຍະຍາວ.**

ນັ້ນແມ່ນເຫດຜົນທີ່ພວກເຮົາຕ້ອງການ Voice ທີ່ບໍ່ສາມາດລົບລ້າງໄດ້ດ້ວຍການໃຊ້ຮອຍຂີດຂອງປາກກາ.

ບັນດາຜູ້ຊ່ຽວຊານດ້ານກົດໝາຍໄດ້ຊີ້ແຈງຢ່າງຈະແຈ້ງວ່າ Voice ຈະບໍ່ມີອຳນາດໃນການຂັດ ຂວາງ ເຮັດໃຫ້ຊັກຊ້າ ຫຼື ການຍັບຍັ້ງກົດໝາຍ ຫຼືການຕັດສິນໃຈ. **Voice ແມ່ນກ່ຽວກັບຄຳແນະນຳ**.

## 8. ເຮັດໃຫ້ຣັດຖະບານເຮັດວຽກໄດ້ດີຂຶ້ນ.

ການລົງຄະແນນສຽງ Yes ໝາຍຄວາມວ່າ:

- ຣັດຖະບານໄດ້ຮັບຄຳແນະນຳທີ່ດີກວ່າ ແລະສົ່ງມອບຜົນໄດ້ຮັບທີ່ດີຂຶ້ນ.
- ເປັນສິ່ງທີ່ເພີ່ມເຕີມໃສ່ຣັດຖະທຳມະນູນທີ່ໄດ້ຮັບການສະໜັບສະໜູນຈາກຜູ້ຊ່ຽວຊານ.

ບັນດາທະນາຍຄວາມອາວຸໂສ ແລະ ບັນດາອະດີດຜູ້ພິພາກສາສານສູງ ໄດ້ເປັນສ່ວນນຶ່ງຂອງຂະບວນການນີ້.

### ສິ່ງທີ່ຜູ້ຊ່ຽວຊານດ້ານກົດໝາຍເວົ້າມີຄື:

- ຖືກຕ້ອງຕາມຣັດຖະທຳມະນູນ ແລະ ຖືກຕ້ອງຕາມກົດໝາຍ.
- ຈະ**ເສີມຂະຫຍາຍ**ລະບົບການປົກຄອງຂອງພວກເຮົາ.
- ບໍ່ມີອຳນາດຍັບຢັ້ງ – ຣັດຖະສະພາ ແລະ ຣັດຖະບານມີອຳນາດລົງນາມຂັ້ນສຸດທ້າຍ.

**Robert French AC, ຫົວໜ້າຜູ້ພິພາກສາສານສູງແຫ່ງອອສເຕຣເລັຍລະຫວ່າງປີ 2008-2017 ແລະ**
**Geoffrey Lindell, ສາດສະດາຈານດ້ານກົດໝາຍກຽດຕິຄຸນ, ມະຫາວິທະຍາໄລ ອາດິເລດ:**
*"Voice ແມ່ນຄວາມຄິດທີ່ຍິ່ງໃຫຍ່ແຕ່ບໍ່ແມ່ນເລື່ອງທີ່ຊັບຊ້ອນ. ມັນມີຄວາມສ່ຽງຕໍ່າແຕ່ໃຫ້ຜົນຕອບແທນສູງ...*
*Voice ຈະມອບໂອກາດທີ່ເປັນປະໂຫຍດໃຫ້ຊົນກຸ່ມທຳອິດໃນການໃຫ້ຄຳແນະນຳທີ່ໃຫ້ຂໍ້ມູນ ແລະ ສອດຄ່ອງ ແລະ ເຊື່ອຖືໄດ້ຕໍ່ຣັດຖະສະພາ ແລະ ຣັດຖະບານ."*
- ບົດຄວາມຄິດຄວາມເຫັນຮ່ວມ (Joint Opinion Piece) ກ່ຽວກັບການຈິໄຈການເງິນຂອງ ອອສເຕຣເລັຍ ວັນທີ 4/2/2023.

## ດຽວນີ້ມັນຂຶ້ນກັບພວກເຮົາ.

**Evonne Goolagong Cawley AC MBE, ອະດີດນັກຫຼິ້ນເທນນິສມື 1 ຂອງໂລກ, ແມ່ຍິງເຜົ່າ Wiradjuri:**
*"ການລົງຄະແນນສຽງ Yes ເປັນໂອກາດສຳລັບຊາວອອສເຕຣເລັຍທຸກຄົນທີ່ຈະສະເຫຼີມສະຫຼອງການປະກອບ ສ່ວນທີ່ຊາວອາບໍຣິຈິໂນລ ແລະ ທໍເຣສ ເທຣດໄອແລນເດີ ໄດ້ເຮັດເພື່ອປະເທດຂອງພວກເຮົາແລະເພື່ອຊ່ວຍໃຫ້ຄົນລຸ້ນຕໍ່ໄປແລ່ນຕາມຄວາມ ຝັນຂອງ ພວກເຂົາ. ຂໍໃຫ້ຈັບຊ່ວງເວລານີ້ໄວ້ໃຫ້ແໜ້ນດ້ວຍມືທັງສອງຂ້າງ"*

ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ໄດ້ໃຫ້ໂອກາດ ທີ່ເກີດຂຶ້ນໄດ້ຄັ້ງດຽວໃນຊີວິດໜຶ່ງຂອງຮຸ່ນພວກເຮົາ.

**ພວກເຮົາສາມາດລົງຄະແນນສຽງ Yes ເພື່ອເປັນສ່ວນນຶ່ງຂອງການລວມເປັນນຶ່ງທີ່ຍິ່ງໃຫຍ່ທີ່ຈະນຳມາຊຶ່ງອະນາຄົດທີ່ດີກວ່າ.**

ພວກເຮົາສາມາດລົງຄະແນນສຽງ Yes ເພື່ອ:

- ເຮັດສິ່ງທີ່ຖືກຕ້ອງແກ່ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ.
- ໃຫ້ຜູ້ຄົນເວົ້າກ່ຽວກັບບັນຫາທີ່ມີຜົນກະທົບຕໍ່ເຂົາເຈົ້າ.
- ສ້າງຄວາມແຕກຕ່າງໃນພາກປະຕິບັດຕົວຈິງທີ່ປັບປຸງຊີວິດ.

**ກໍລະນີ Yes ມີຕໍ່ຢູ່** ໜ້າ20

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງໃຫ້ກົດໝາຍທີ່ສະເໜີມາ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແຜ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**





**ປະຈຸບັນນີ້ມີອົງການຜູ້ຕາງໜ້າຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ຫຼາຍຮ້ອຍຄົນ**ຢູ່ໃນທຸກລະດັບຂອງຣັດຖະບານ.

| |
|---|
| ປີນີ້, ລັດຖະບານໄດ້ຈັດສັນເງິນ 4.3 ພັນລ້ານໂດລາໃຫ້ແກ່ອົງການຊົນເຜົ່າພື້ນເມືອງອອສເຕຣເລັຍ, ເຊິ່ງມີເຈົ້າໜ້າທີ່ 1,400 ຄົນ. |

ເວັບໄຊທ໌ ແລະ ແຜນການຂອງອົງການນີ້ກ່າວວ່າ: "ພວກເຮົາ ... ຮັບປະກັນວ່າປະຊາຊົນ ຊາວອາບໍຣິຈິໂນລ ແລະ ທໍເຣສເທຣດ ໄອແລນເດີ ມີສິດມີສຽງໃນການຕັດສິນໃຈທີ່ມີຜົນກະທົບຕໍ່ພວກເຂົາ."

ບໍ່ມີຄຳແນະນຳວ່າ Voice ນີ້ຈະແທນທີ່ສິ່ງເຫຼົ່ານີ້ໄດ້. ມັນຈະດຳເນີນການເປັນລະບົບຣາດຊະການນຶ່ງໃນຈຳນວນຫຼາຍໆລະບົບ.

## 9. VOICE ນີ້ຈະຄົງຢູ່ຕະຫຼອດໄປ

Voice ນີ້ບໍ່ແມ່ນການທົດລອງ ຫຼື ໂຄງການທົດລອງ. ມັນຈະບໍ່ຢູ່ໃນກົດໝາຍທີ່ສາມາດຖືກຖອນຄືນໄດ້.

ເມື່ອມັນຢູ່ໃນຣັດຖະທຳມະນູນແລ້ວ, ມັນຈະຍົກເລີກບໍ່ໄດ້.

ເມື່ອສານສູງສຸດຕີຄວາມໝາຍແລ້ວ, ຣັດຖະສະພາຈະລົບລ້າງບໍ່ໄດ້.

ພວກເຮົາຈະຕິດຢູ່ກັບຜົນເສຍຕະຫຼອດໄປ.

## 10. ມີວິທີໄປທາງໜ້າທີ່ດີກວ່າ

ການລົງປະຊາມະຕິນີ້ບໍ່ແມ່ນກ່ຽວກັບການຮັບຮູ້ຊາວຊົນເຜົ່າພື້ນເມືອງອອສເຕຣເລັຍໃນຣັດຖະທຳມະນູນເທົ່ານັ້ນ.

**ສິ່ງນັ້ນສາມາດບັນລຸໄດ້ໂດຍບໍ່ມີການຜູກມັດກັບ Voice ທີ່ມີຄວາມສ່ຽງ ບໍ່ເປັນທີ່ຮູ້ຈັກ ແລະ ຖາວອນ.**

ການຮັບຮູ້ໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກຊາວອອສເຕຣເລັຍ. ຢ່າງໃດກໍຕາມ, ການສະເໜີ Voice ນີ້ແມ່ນເປັນບັນຫາ.

ມີຊາວອອສເຕຣເລັຍຫຼາຍຄົນທີ່ຄັດຄ້ານ Voice ໂດຍຕາມຫຼັກການ.

ຄົນອື່ນໆອາດຈະເຕັມໃຈທີ່ຈະພິຈາລະນາທາງເລືອກ Voice ທີ່ມີຄວາມສ່ຽງໜ້ອຍ, ແຕ່ຣັດຖະບານບໍ່ໄດ້ໃຫ້ທາງເລືອກນີ້ໃຫ້ທ່ານ.

ເມື່ອມີການສະເໜີການປ່ຽນແປງຣັດຖະທຳມະນູນຄັ້ງກ່ອນໆ ໄດ້ມີການເປີດກອງປະຊຸມຣັດຖະທຳມະນູນເພື່ອພິຈາລະນາບັນດາທາງເລືອກ ແລະ ລາຍລະອຽດຢ່າງເໝາະສົມ.

ບໍ່ມີຂະບວນການດັ່ງກ່າວເກີດຂຶ້ນຢູ່ທີ່ນີ້. ຂະບວນການນີ້ແມ່ນຟ້າວຮີບ ແລະ ໝັກໜ່ວງ.

ວິທີການນີ້ບໍ່ໄດ້ເປັນອັນນຶ່ງອັນດຽວກັນ ຫຼື ໄດ້ຜົນ. ມັນເປັນການແບ່ງແຍກ.

## ການຕັດສິນໃຈນີ້ເປັນຂອງທ່ານ

ນີ້ແມ່ນການຕັດສິນໃຈທີ່ສຳຄັນຫຼາຍ. ແຕ່ໜ້າເສັຍດາຍທີ່ຄຳຖາມທີ່ຖືກຕ້ອງຕາມກົດໝາຍແລະຂໍ້ກັງວົນຂອງຊາວອອສ ເຕຣເລັຍຈຳນວນຫຼາຍໄດ້ຖືກເພີກເສີຍ.

ໂຊກດີທີ່ການລົງປະຊາມະຕິຄັ້ງນີ້ຈະບໍ່ຖືກຕັດສິນໂດຍນັກການເມືອງ ບໍລິສັດ ຫຼື ຄົນມີຊື່ສຽງ.

ມັນຈະຖືກຕັດສິນໂດຍຊາວອອສເຕຣເລັຍທຸກໆຄົນ. ມັນສົ່ງຜົນກະທົບຕໍ່ຊາວອອສເຕຣເລັຍທຸກໆຄົນ.

**ຖ້າຫາກວ່າທ່ານບໍ່ຮູ້, ຈົ່ງລົງຄະແນນສຽງ no.**

## ຂໍ້ມູນເພີ່ມເຕີມ

ສຳລັບຂໍ້ມູນແລະ ອັບເດດ ຈົ່ງໄປທີ່:

- www.riskyvoice.com
- www.oneandfree.au
- www.australiansforunity.com.au

ສິ້ນສຸດຂອງກໍລະນີ **NO**

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງຄັດຄ້ານກົດໝາຍທີ່ສະເໜີ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແຜ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**

# ກໍລະນີສຳລັບການລົງຄະແນນສຽງ Yes

ລົງຄະແນນສຽງ Yes **ເພື່ອການຮັບຮູ້**, **ການຮັບຟັງ**ແລະ**ຜົນໄດ້ຮັບທີ່ດີກວ່າ**.

ໃຫ້ພວກເຮົາລົງຄະແນນສຽງ Yes ເພື່ອຮັບປະກັນວ່າຊາວອາບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ມີຊີວິດທີ່ດີຂຶ້ນໂດຍມີໂອກາດຫຼາຍຂຶ້ນສຳລັບລູກຫຼານຂອງເຂົາເຈົ້າ.

ດ້ວຍຈິດວິນຍານຂອງຄວາມສາມັກຄີ, ຈົ່ງມາຮ່ວມລົງຄະແນນສຽງ Yes ນຳກັນ

**ສິ້ນສຸດຂອງກໍລະນີ YES.**

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງໃຫ້ກົດໝາຍທີ່ສະເໜີມາ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແຜ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**



# ກໍລະນີສຳລັບການລົງຄະແນນສຽງ No

ກໍລະນີ No ສິ້ນສຸດຢູ່ໜ້າ 19

**ໃຜຂຽນເລື້ອງນີ້?** **ເນື້ອຫາຂອງຂໍ້ໂຕ້ຖຽງນີ້ (ເຊິ່ງສາມາດເບິ່ງໄດ້ທີ່ aec.gov.au/referendums/pamphlet.htm) ໄດ້ຮັບອະນຸຍາດຈາກສະມາຊິກຣັດຖະສະພາສ່ວນໃຫຍ່ທີ່ໄດ້ລົງຄະ ແນນສຽງຄັດຄ້ານກົດໝາຍທີ່ສະເໜີ ແລະຕ້ອງການສົ່ງຕໍ່ກໍລະນີດັ່ງກ່າວ. ຂໍ້ຄວາມນີ້ໄດ້ຖືກຈັດພິມເຜີຍແຜ່ມາໂດຍບໍ່ມີການດັດແກ້ໂດຍຄະນະກຳມະການເລືອກຕັ້ງ.**

ໜ້ານີ້ຖືກປະໄວ້ຫວ່າງເປົ່າໂດຍເຈດຕະນາ



AEC
Australian Electoral Commission

# ຄູ່ມືແນວປະຕິບັດຢ່າງເປັນທາງການຂອງທ່ານ ໃນການລົງປະຊາມະຕິໃນປີ 2023

## ມື້ໃດແມ່ນມື້ລົງຄະແນນສຽງ?

ສຳລັບຂໍ້ມູນເພີ່ມເຕີມ, ສະແກນລະຫັດ QR
ຫຼື ເຂົ້າໄປທີ່ **aec.gov.au/referendums**

**aec.gov.au**
13 23 26

ໄດ້ຮັບການອະນຸຍາດຈາກຄະນະກຳມາທິການເລືອກຕັ້ງ, 10 Mort Street, Canberra
Authorised by the Electoral Commissioner, 10 Mort Street, Canberra

# **ຂໍ້ຄວາມຈາກ** ກຳມາທິການ ການເລືອກຕັ້ງ

ມັນເປັນເວລາທີ່ຂ້ອນຂ້າງດົນນານແລ້ວນັບຕັ້ງແຕ່ພວກເຮົາມີການລົງປະຊາມະຕິ. ຄັ້ງສຸດທ້າຍແມ່ນໄດ້ຈັດຂຶ້ນໃນປີ ໑໙໙໙, ຊຶ່ງໝາຍຄວາມວ່າສຳລັບຫຼາຍໆຄົນທີ່ອ່ານຂໍ້ຄວາມນີ້ ມັນຈະເປັນຄັ້ງທຳອິດທີ່ພວກເຂົາໄດ້ລົງຄະແນນສຽງໃນການລົງປະຊາມະຕິ.

ການລົງປະຊາມະຕິແມ່ນການລົງຄະແນນສຽງລະດັບຊາດໃນຄຳຖາມທີ່ສະເໜີກ່ຽວກັບການປ່ຽນແປງລັດຖະທຳມະນູນ - ໃນກໍລະນີນີ້ ແມ່ນຈະໃຫ້ມີການປ່ຽນແປງລັດຖະທຳມະນູນເພື່ອຮັບຮູ້ປະຊາຊົນກຸ່ມທຳອິດຂອງອອສເຕຣ ເລັຍໂດຍການສ້າງຕັ້ງ Voice ຂອງຊາວອະບໍຣິຈິໂນລ ແລະ ທໍເຣສເທຣດໄອແລນເດີ ຫຼືບໍ່.

ການລົງຄະແນນສຽງໃນການລົງປະຊາມະຕິແມ່ນແຕກຕ່າງຈາກການເລືອກຕັ້ງ ແລະ ຜົນໄດ້ຮັບແມ່ນອີງໃສ່ວິທີການລົງຄະແນນສຽງ 'ສ່ວນຫຼາຍສອງລະດັບ' - ນັ້ນຄື:

- ສຽງສ່ວນໃຫຍ່ໃນລະດັບຊາດ (ຫຼາຍກວ່າ 50%) ຈາກທຸກລັດ ແລະ ອານາເຂດ ແລະ
- ສຽງສ່ວນໃຫຍ່ (ຫຼາຍກວ່າ 50%) ໃນລັດສ່ວນໃຫຍ່ (ຢ່າງໜ້ອຍສີ່ໃນຫົກລັດ).

AEC ໄດ້ຈັດທຳຄູ່ມືນີ້ຂຶ້ນເພື່ອຊ່ວຍໃຫ້ທ່ານວາງແຜນການລົງຄະແນນສຽງຂອງທ່ານຢູ່ໃນການລົງປະຊາມະຕິ, ລວມທັງວິທີການລົງຄະແນນສຽງຢ່າງຖືກຕ້ອງ, ສິ່ງທີ່ເກີດຂຶ້ນຢູ່ບ່ອນປ່ອນບັດ ແລະຄຳແນະນຳໃນການກວດສອບແຫຼ່ງຂໍ້ມູນ.

ພວກເຮົາຈະມີສະຖານທີ່ປ່ອນບັດຫຼາຍກວ່າ 7,000 ແຫ່ງໃນທົ່ວປະເທດໃນມື້ລົງຄະແນນສຽງ, ໂຕເລືອກໃນການລົງຄະແນນສຽງລ່ວງໜ້າ, ແລະ ມີທີມງານບໍລິການຜູ້ມີສິດເລືອກຕັ້ງທີ່ຢູ່ຫ່າງໄກສອກຫຼີກຫຼາຍຂຶ້ນກວ່າທີ່ເຄີຍໄປຢ້ຽມຢາມສະຖານທີ່ຫ່າງໄກສອກຫຼີກມາກ່ອນ.

ຄວາມເປັນກາງ ແລະ ເປັນອິດສະລະແມ່ນພື້ນຖານຂອງຄະນະກຳມາທິການເລືອກຕັ້ງຂອງອອສເຕຣເລັຍ. ຄວາມໂປ່ງໃສ, ຄວາມປອດໄພ ແລະ ຄວາມຮັບຜິດຊອບໃນຂະບວນການທີ່ພວກເຮົາດຳເນີນການແມ່ນມີຄວາມສຳ ຄັນ ແລະ ເຫັນໄດ້ຢ່າງຊັດເຈນຈາກທຸກມຸມມອງ.

ຂ້າພະເຈົ້າມີຄວາມພາກພູມໃຈໃນບົດບາດທີ່ພວກເຮົາມີໃນການຈັດຕັ້ງການລົງປະຊາມະຕິດ້ວຍຄວາມຊື່ສັດໃນທຸກຂັ້ນຕອນຂອງຂະບວນການ.

ເຂົ້າເບິ່ງ **aec.gov.au/referendums** ສຳລັບຂໍ້ມູນເພີ່ມເຕີມ.

**Tom Rogers**
ທ່ານ ກຳມາທິການ ການເລືອກຕັ້ງ

ຫຼາຍກວ່າ
**97%**
ຜູ້ມີສິດເລືອກຕັ້ງມີຊື່ຢູ່ໃນລາຍຊື່ການເລືອກຕັ້ງ

ສະຖານທີ່ປ່ອນບັດ ກວ່າ
**7,000 ແຫ່ງ**

ສູນປ່ອນບັດລ່ວງໜ້າ ກວ່າ
**500 ແຫ່ງ**

ພະນັກງານຊົ່ວຄາວເຮັດວຽກການລົງປະຊາມະຕິຫຼາຍເຖິງ
**100,000ຄົນ**

# **ຢຸດ ແລະ ພິຈາລະນາ**
## ກວດເບິ່ງແຫຼ່ງທີ່ມາຂອງການລົງປະຊາມະຕິນີ້

ໃນຊ່ວງເວລາຂອງການລົງປະຊາມະຕິ ທ່ານອາດຈະພົບເຫັນຂໍ້ມູນກ່ຽວກັບຂະບວນການລົງຄະແນນສຽງທີ່ບໍ່ມີຫຼັກຖານຢັ້ງຢືນ, ບໍ່ມີບໍລິບົດ ຫຼື ເຮັດໃຫ້ເຂົ້າໃຈຜິດ.

AEC ແມ່ນອົງການອິດສະລະທີ່ມີໜ້າທີ່ໃນການດຳເນີນການລົງປະຊາມະຕິ. ພວກເຮົາຈະຕິດຕໍ່ສື່ສານກັບຜູ້ທີ່ມີສິດເລືອກຕັ້ງກ່ຽວກັບຂໍ້ກຳນົດໃນການເຂົ້າຮ່ວມ ຈຸດປະສົງຂອງການລົງປະຊາມະຕິ ແລະ ໂຕເລືອກໃນການລົງຄະແນນສຽງ.

ມັນເປັນສິ່ງສຳຄັນທີ່ທ່ານຕ້ອງພິຈາລະນາຢ່າງຮອບຄອບກ່ຽວກັບສິ່ງທີ່ທ່ານ ເຫັນ, ໄດ້ຍິນ ແລະ ອ່ານກ່ຽວກັບຂະບວນການລົງປະຊາມະຕິ.

ໃຊ້ເວລາພິຈາລະນາວ່າຂໍ້ມູນແມ່ນ:

- ຈາກແຫຼ່ງທີ່ເຊື່ອຖືໄດ້ ຫຼື ເປັນທີ່ຮູ້ຈັກ
- ປະຈຸບັນ
- ປອດໄພ (ບໍ່ແມ່ນການຫລອກລວງ).

ນີ້ເປັນສິ່ງສຳຄັນໂດຍສະເພາະໃນເວລາທີ່ຢູ່ໃນສື່ໂຊຊຽນແລະອອນໄລນ໌.

ໄປທີ່ **aec.gov.au/stopandconsider** ສຳລັບຂໍ້ມູນເພີ່ມເຕີມ ແລະ ວິດີໂອສັ້ນໆທີ່ມີຄຳແນະນຳທີ່ເປັນປະໂຫຍດ.




ໄດ້ຮັບການອະນຸຍາດຈາກຄະນະກຳມາທິການເລືອກຕັ້ງ, 10 Mort Street, Canberra

# **ວາງແຜນລ່ວງໜ້າເພື່ອລົງຄະແນນສຽງໃນການລົງປະຊາມະຕິ**
## ສະຖານທີ່ປ່ອນບັດຈະເປີດໃນເວລາ ໘ ໂມງເຊົ້າ ແລະ ປິດເວລາ ໖ ໂມງແລງ

### ໃຜຕ້ອງລົງຄະແນນສຽງ?

ພົນລະເມືອງອອສເຕຣເລັຍທຸກຄົນທີ່ມີອາຍຸ ໑໘ ປີຂຶ້ນໄປຈະຕ້ອງລົງທະບຽນ ແລະ ລົງຄະແນນສຽງໃນການລົງປະຊາມະຕິນີ້.

### ຂ້ອຍສາມາດລົງຄະແນນສຽງໄດ້ຢູ່ໃສ?

ທ່ານສາມາດລົງຄະແນນສຽງໄດ້ຢູ່ບ່ອນປ່ອນບັດໃນລັດ ຫຼື ອານາເຂດຂອງທ່ານໃນວັນລົງຄະແນນສຽງ. ສະຖານທີ່ປ່ອນບັດແມ່ນເປີດແຕ່ 8 ໂມງເຊົ້າ ຫາ 6 ໂມງແລງ.

ສະຖານທີ່ປ່ອນບັດມັກຈະມີຢູ່ໃນໂຮງຮຽນທ້ອງຖິ່ນ, ໂບດ, ຫໍຊຸມຊົນ ແລະ ອາຄານສາທາລະນະ. ເພື່ອຊອກຫາສະຖານທີ່ປ່ອນບັດທີ່ໃກ້ທີ່ສຸດຂອງທ່ານ, ກະລຸນາເຂົ້າໄປທີ່ **aec.gov.au/where**

ຖ້າທ່ານມີຂໍ້ຈຳກັດດ້ານການເຄື່ອນໄຫວ ຫຼື ມີຄວາມພິການ, ຫຼື ເບິ່ງແຍງຜູ້ທີ່ມີບັນຫາດ້ານນີ້ ທ່ານສາມາດກວດເບິ່ງລາຍລະອຽດການເຂົ້າຫາສະຖານທີ່ປ່ອນບັດໄດ້ທີ່ **aec.gov.au/where**

ສຳລັບໂຕເລືອກໃນການລົງຄະແນນສຽງສຳລັບຄົນຕາບອດ ແລະ ສາຍຕາມົວ ກະລຸນາເຂົ້າໄປທີ່ **aec.gov.au/assistance** ຫຼື ໂທຫາ **13 23 26**.

### ຈະເປັນແນວໃດຖ້າຂ້ອຍຢູ່ໃນລັດ ຫຼື ອານາເຂດອື່ນ?

ຖ້າທ່ານຈະຢູ່ໃນຕ່າງລັດໃນວັນລົງຄະແນນສຽງ ທ່ານສາມາດລົງຄະແນນສຽງຢູ່ສູນລົງຄະແນນສຽງລະຫວ່າງລັດທີ່ກຳນົດໄວ້ ຫຼື ພິຈາລະນາໄປເລືອກລົງຄະແນນສຽງລ່ວງໜ້າ.

### ຈະເປັນແນວໃດຖ້າຂ້ອຍບໍ່ສາມາດໄປໄດ້ໃນມື້ລົງຄະແນນສຽງ?

ຖ້າທ່ານບໍ່ສາມາດໄປບ່ອນປ່ອນບັດໃນລັດ ຫຼື ອານາເຂດຂອງທ່ານໃນມື້ລົງຄະແນນສຽງ ທ່ານອາດມີສິດລົງຄະແນນສຽງລ່ວງໜ້າດ້ວຍຕົນເອງ ຫຼື ທາງໄປສະນີ.

### ວິທີການລົງຄະແນນສຽງລ່ວງໜ້າດ້ວຍຕົວເອງ

ຖ້າທ່ານມີສິດ, ທ່ານສາມາດລົງຄະແນນສຽງກ່ອນມື້ລົງຄະແນນສຽງໄດ້. ສູນລົງຄະແນນສຽງລ່ວງໜ້າເປີດຕັ້ງແຕ່ວັນຈັນສອງອາທິດກ່ອນວັນລົງຄະແນນສຽງ. ວັນທີແລະເວລາເປີດແຕກຕ່າງກັນໄປ, ສະນັ້ນຈົ່ງເຂົ້າໄປທີ່ **aec.gov.au/where** ເພື່ອກວດເບິ່ງລາຍລະອຽດຂອງແຕ່ລະສູນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການລົງຄະແນນສຽງລ່ວງໜ້າ ແລະ ເພື່ອກວດເບິ່ງວ່າທ່ານມີສິດຫຼືບໍ່, ຈົ່ງເຂົ້າໄປທີ່ **aec.gov.au/early** ຫຼື ໂທຫາ **13 23 26**.

### ວິທີລົງຄະແນນສຽງລ່ວງໜ້າທາງໄປສະນີ

ການລົງຄະແນນສຽງທາງໄປສະນີແມ່ນມີໃຫ້ແກ່ຜູ້ມີສິດເລືອກຕັ້ງ. ກວດເບິ່ງການມີສິດຂອງທ່ານແລະສະໝັກທາງອອນໄລນ໌ ທີ່ **aec.gov.au/pva** ຫຼື ໂດຍການສະແກນລະຫັດ QR.

ກະລຸນາໂທຫາ **13 23 26** ຖ້າຫາກວ່າທ່ານບໍ່ສາມາດເຂົ້າເຖິງອອນໄລນ໌ໄດ້ ແລະ ຕ້ອງການທີ່ຈະສະໝັກຂໍເອົາການລົງຄະແນນສຽງທາງໄປສະນີ.

ຂຽນຕື່ມໃບຄຳຮ້ອງຂອງທ່ານສຳລັບການລົງຄະແນນສຽງທາງໄປສະນີ ເພື່ອໃຫ້ມັນໄປຮອດ AEC **ພາຍໃນເວລາບໍ່ເກີນ ໖ ໂມງແລງຂອງວັນພຸດ ກ່ອນມື້ລົງຄະແນນສຽງ**.

# **ເກີດຫຍັງຂຶ້ນຢູ່ບ່ອນປ່ອນບັດ**

1. ເມື່ອທ່ານໄປຮອດຈຸດອອກບັດເລືອກຕັ້ງ ເຈົ້າໜ້າທີ່ກຳກັບການປ່ອນບັດຈະຖາມຊື່ເຕັມ ແລະ ທີ່ຢູ່ຂອງທ່ານ ແລະ ຖາມວ່າທ່ານໄດ້ລົງຄະແນນສຽງ ສຳລັບປະຊາມະຕິ ປີ 2023 ແລ້ວບໍ. ຊື່ຂອງທ່ານຈະຖືກຂີດໝາຍອອກຈາກລາຍຊື່ຜູ້ມີສິດເລືອກຕັ້ງ.
2. ທ່ານຈະໄດ້ຮັບບັດລົງຄະແນນສຽງຂອງທ່ານ.
3. ອ່ານຄຳແນະນຳໃນບັດລົງຄະແນນສຽງຢ່າງລະມັດລະວັງ.
4. ຈົ່ງຂຽນຕື່ມບັດລົງຄະແນນສຽງຂອງທ່ານ.
5. ເມື່ອທ່ານຂຽນຕື່ມໃບລົງຄະແນນສຽງຂອງທ່ານແລ້ວ, ພັບເຈ້ຍນັ້ນແລະໃສ່ໄວ້ໃນກ່ອງປ່ອນບັດທີ່ໄດ້ຈັດໄວ້ໃຫ້.
6. ຖ້າທ່ານໄດ້ໃຊ້ສໍດຳ AEC ໃຫ້ຖິ້ມມັນໄວ້ໃນກ່ອງທາງອອກ. ຈະມີເຈວລ້າງມືໄວ້ໃຫ້ທາງອອກ.

**ຈື່ໄວ້ວ່າ ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອ ທ່ານສາມາດເອົາຄົນທີ່ທ່ານໄວ້ໃຈມານຳທ່ານ ຫຼື ຂໍໃຫ້ເຈົ້າໜ້າທີ່ລົງຄະແນນສຽງຊ່ວຍ.**

**AEC ໃຫ້ຄວາມສຳຄັນຕໍ່ຄວາມປອດໄພຂອງຜູ້ມີສິດເລືອກຕັ້ງ ແລະ ພະນັກງານຂອງພວກເຮົາຢ່າງຈິງຈັງ. AEC ສືບຕໍ່ຕິດຕາມສະພາບແວດລ້ອມຂອງ COVID-19 ແລະ ປະຕິບັດຕາມຄຳແນະນຳຈາກເຈົ້າໜ້າທີ່ສາທາລະນະສຸກທີ່ກ່ຽວຂ້ອງ. ຂໍ້ມູນໃນຄູ່ມືນີ້ ສະທ້ອນເຖິງສະຖານະການໃນເວລາພິມ. ນີ້ອາດຈະສົ່ງຜົນໃຫ້ມີການປ່ຽນແປງມາດຕະການທີ່ໃຊ້ຢູ່.**

**ຈະມີເຈວລ້າງມືໄວ້ບໍລິການ ແລະ ຂໍແນະນຳໃຫ້ທ່ານເອົາໜ້າກາກອະນາໄມມາໃສ່ ແລະ ຮັກສາລະຍະຫ່າງທາງກາຍ. ທ່ານສາມາດນຳໃຊ້ສໍດຳ AEC ທີ່ສະອາດ ຫຼື ທ່ານສາມາດເອົາສໍດຳ ຫຼື ປາກກາຂອງທ່ານມາເອງກໍໄດ້.**

Authorised by the Electoral Commissioner, 10 Mort Street, Canberra

# ເຮັດແນວໃດເພື່ອໃຫ້ຄະແນນສຽງຂອງທ່ານຖືກນັບ

ສຳລັບການລົງປະຊາມະຕິນີ້, ທ່ານຈະໄດ້ຮັບບັດລົງຄະແນນສຽງທີ່ມີການ
ສະເໜີການປ່ຽນແປງລັດຖະທຳມະນູນຂອງ ອອສເຕຣເລັຍ.

ໃນໃບລົງຄະແນນສຽງ:

ຂຽນ **YES** ຖ້າທ່ານອະນຸມັດ
ການປ່ຽນແປງທີ່ສະເໜີ




ຕົວຢ່າງເຈັ້ຍລົງຄະແນນສຽງ

**ຫຼື**

ຂຽນ **NO** ຖ້າທ່ານບໍ່ອະນຸມັດ
ການປ່ຽນແປງທີ່ສະເໜີ




ຕົວຢ່າງເຈັ້ຍລົງຄະແນນສຽງ

ຄຳຕອບຂອງທ່ານຄວນຂຽນເປັນພາສາອັງກິດ.

ຢ່າກັງວົນຖ້າທ່ານເຮັດຜິດ.
ທ່ານສາມາດຂໍບັດລົງຄະແນນສຽງໃໝ່ ແລະເລີ້ມໃໝ່ອີກໄດ້.

**ການລົງຄະແນນສຽງແມ່ນເປັນການບັງຄັບສຳລັບພົນລະເມືອງອອສເຕຣເລັຍທີ່ມີອາຍຸ 18 ປີຂຶ້ນໄປ.
ຖ້າທ່ານບໍ່ລົງຄະແນນສຽງ ທ່ານອາດຈະຖືກປັບໃໝ ຫຼື ຖືກດຳເນີນຄະດີ.
ຖ້າທ່ານລົງຄະແນນສຽງຫຼາຍກວ່າໜຶ່ງຄັ້ງຖືວ່າເປັນການກະທຳຜິດທາງອາຍາ.**

ໄດ້ຮັບການອະນຸຍາດຈາກຄະນະກຳມາທິການເລືອກຕັ້ງ, 10 Mort Street, Canberra | Authorised by the Electoral Commissioner, 10 Mort Street, Canberra